ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ ເລກທີ 05 /ສພຂ.ສຂ
ສະຫວັນນະເຂດ, ວັນທີ 30 ກໍລະກົດ 2025

ມະຕິ
ກອງປະຊຸມສະພາປະຊາຊົນແຂວງ
ວ່າດ້ວຍ ການຮັບຮອງເອົາຂໍ້ຕົກລົງຂອງເຈົ້າແຂວງ
ກ່ຽວກັບ ການຄຸ້ມຄອງແຜນຜັງຕົວເມືອງອຸທຸມພອນ

- ອີງຕາມ ມາດຕາ 60 ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມ ໜັງສືສະເໜີ ຂອງເຈົ້າແຂວງສະຫວັນນະເຂດ ເພື່ອພິຈາລະນາເອົາຮ່າງຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການຄຸ້ມຄອງແຜນຜັງຕົວເມືອງອຸທຸມພອນ ສະບັບເລກທີ 1498/ຈຂ, ລົງວັນທີ 25 ກໍລະກົດ 2025.

ຜ່ານການຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ດ້ວຍຄວາມຮັບຜິດຊອບສູງ ຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແລະ ສະມາຊິກສະພາປະຊາຊົນແຂວງ ໃນກອງປະຊຸມ ສະໄໝສາມັນ ເທື່ອທີ 09 ຂອງສະພາປະຊາຊົນແຂວງ ຊຸດທີ II ຕໍ່ເນື້ອໃນຮ່າງຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍ ການຄຸ້ມຄອງແຜນຜັງຕົວເມືອງອຸທຸມພອນ.

ກອງປະຊຸມສະພາປະຊາຊົນແຂວງ ຕົກລົງ

ມາດຕາ 1 ຮັບຮອງເອົາ ຂໍ້ຕົກລົງເຈົ້າແຂວງວ່າດ້ວຍ ການຄຸ້ມຄອງແຜນຜັງຕົວເມືອງອຸທຸມພອນ ຄະແນນສຽງເຫັນດີ ຫຼາຍ ກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາປະຊາຊົນແຂວງ ທີ່ເຂົ້າຮ່ວມກອງປະຊຸມ;

ມາດຕາ 2 ມອບໃຫ້ອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການຜັນຂະຫຍາຍມະຕິສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 3 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ກົງແກ້ວ ມີວໍລະຈັກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ

ເລກທີ 1337/ຈຂ
ສະຫວັນນະເຂດ, ວັນທີ 26 ສິງຫ 2025

ຂໍ້ຕົກລົງ
ວ່າດ້ວຍ ການຄຸ້ມຄອງແຜນຜັງຕົວເມືອງອຸທຸມພອນ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 75/ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມກົດໝາຍ ວ່າດ້ວຍການສ້າງນິຕິກຳ ສະບັບປັບປຸງ ເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມກົດໝາຍ ວ່າດ້ວຍການຜັງເມືອງ ສະບັບປັບປຸງ ເລກທີ 40/ສພຊ, ລົງວັນທີ 16 ພະຈິກ 2017;
- ອີງຕາມກົດໝາຍ ວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ມະຕິຂອງກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາປະຊາຊົນແຂວງ ຊຸດທີ II ວ່າດ້ວຍ ການຮັບຮອງເອົາ ຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງແຜນຜັງຕົວເມືອງອຸທຸມພອນ ສະບັບເລກທີ 05/ສພຂ.ສຂ, ລົງວັນທີ 30 ກໍລະກົດ 2025.

ເຈົ້າແຂວງ ຕົກລົງ:

ໝວດທີ 1
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ເພື່ອ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆ ເປັນບ່ອນອີງໃຫ້ແກ່ ອົງການປົກຄອງທ້ອງຖິ່ນ ໂດຍສະເພາະພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາ ແລະ ຄຸ້ມຄອງຕົວເມືອງໃຫ້ ມີຄວາມເປັນລະບຽບຮຽບຮ້ອຍ, ສວຍງາມ, ປອດໄພ, ຖືກຫຼັກສຸຂະອະນາໄມ, ຮັກສາໄດ້ສະພາບແວດລ້ອມ ແລະ ການອະນຸລັກບັນດາວັດຖຸມີຄ່າ ແລະ ສິ່ງທີ່ມີຄຸນຄ່າທາງດ້ານ ວັດທະນະທຳ ແລະ ປະຫວັດສາດ. ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດ, ການພັດທະນາຕົວເມືອງ, ຕາແສງ ໃຫ້ສອດຄ່ອງກັບແນວທາງຂອງພັກ ແລະ ນະໂຍບາຍຂອງລັດຖະບານ ທີ່ວາງອອກໃຫ້ໄດ້ຮັບຜົນຢ່າງແທ້ຈິງ.

ມາດຕາ 2 ການຄຸ້ມຄອງແຜນຜັງເມືອງຕົວເມືອງອຸທຸມພອນ

ການຄຸ້ມຄອງແຜນຜັງເມືອງອຸທຸມພອນ ແມ່ນການຄຸ້ມຄອງການສຳຫຼວດ, ອອກແບບ ແລະ ວາງແຜນ ຜັງຕົວເມືອງ ໃຫ້ຖືກຕ້ອງຕາມມາດຕະຖານທາງດ້ານບໍລິຫານ, ເຕັກນິກ, ວິທະຍາສາດ, ເສດຖະກິດ-ວັດທະ ນະທຳ ແລະ ສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ ລວມທັງການຄວບຄຸມການພັດທະນາຕົວເມືອງ ແລະ ການກໍ່ສ້າງໃຫ້ສອດຄ່ອງກັບແຜນຜັງຕົວເມືອງທີ່ຖືກຮັບຮອງ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ.

ມາດຕາ 3 ອະທິບາຍສັບ

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. ຕົວເມືອງ ໝາຍເຖິງ ພື້ນທີ່ທີ່ມີປະຊາກອນ ດຳລົງຊີວິດໜາແໜ້ນ ປະກອບອາຊີບຢູ່ໃນຂົງເຂດອຸດສາຫະກຳ, ການຄ້າ ແລະ ການບໍລິການເປັນສ່ວນຫຼາຍ ແລະ ມີໂຄງລ່າງພື້ນຖານທາງດ້ານເສດຖະກິດ-ສັງຄົມ;
2. ຕົວເມືອງອຸທຸມພອນ ໝາຍເຖິງ ເຂດພື້ນທີ່ຕົວເມືອງ ຊຶ່ງກວມສ່ວນໜຶ່ງ ຫຼື ທັງໝົດຂອງຕົວເມືອງ ໂດຍອີງຕາມຂອບເຂດຂອງແຜນຜັງລວມທີ່ໄດ້ຜ່ານການຮັບຮອງເປັນແຕ່ລະໄລຍະ;
3. ຕາແສງ ໝາຍເຖິງ ແມ່ນເຂດການປົກຄອງທ້ອງຖິ່ນຂັ້ນລຸ່ມສຸດ ທີ່ຂຶ້ນກັບເມືອງ ເຊິ່ງປະກອບດ້ວຍຫຼາຍບ້ານ;
4. ພູມີທັດຂອງຕົວເມືອງ ໝາຍເຖິງ ພາບລວມທີ່ສ່ອງແສງເຖິງການດຳລົງຊີວິດຂອງປະຊາຊົນໃນຕົວເມືອງ, ພັນລະນາເຖິງສິ່ງປຸກສ້າງ, ສິ່ງແວດລ້ອມທາງດ້ານທຳມະຊາດ ແລະ ສັງຄົມ;
5. ສະຖາປັດຕະຍະກຳຕົວເມືອງ ໝາຍເຖິງ ສີລະປະການອອກແບບຂອງສິ່ງປຸກສ້າງທີ່ສະແດງເຖິງລັກສະນະ, ສັດສ່ວນ, ວັດຖຸປະສົງ ແລະ ເປົ້າໝາຍການນຳໃຊ້ທີ່ມີການກົມກຽວກັບພູມສັນຖານ ແລະ ສິ່ງແວດລ້ອມທາງດ້ານທຳມະຊາດ ແລະ ສັງຄົມຂອງຕົວເມືອງ;
6. ແຜນທີ່ພູມສັນຖານຂອງຕົວເມືອງ ໝາຍເຖິງ ການສະແດງລາຍລະອຽດຂອງຮູບຮ່າງໜ້າດິນ, ລະດັບສູງ, ທີ່ຕັ້ງບ້ານເຮືອນ, ແມ່ນ້ຳ, ຕາໜ່າງຄົມມະນາຄົມ, ວັດຖຸທຳມະຊາດ, ບູຮານນະສະຖານ;
7. ເສັ້ນແຖວການປຸກສ້າງ ໝາຍເຖິງ ເສັ້ນສົມມຸດຖານລຽບຝາເບື້ອງໜ້າດ້ານນອກຂອງອາຄານກຳນົດໄວ້ເພື່ອວາງທີ່ຕັ້ງຊັ້ນລຸ່ມຂອງອາຄານທີ່ຕິດກັບໜ້າດິນ ແລະ ຂະໜານໄປຕາມເສັ້ນສະຫງວນຂອງທາງ;
8. ເສັ້ນເຂດສະຫງວນທາງ ໝາຍເຖິງເສັ້ນສົມໝຸດຖານ ທີ່ຂະໜານກັບເສັ້ນຂອບນອກຂອງທາງຍ່າງຂອງຖະໜົນ ແລະ ຕິດກັບເສັ້ນກຳມະສິດທີ່ດິນເບື້ອງໜ້າທາງ. ເສັ້ນເຂດສະຫງວນທາງ ທັງສອງຟາກຂອງເສັ້ນທາງຍັງກຳນົດໄວ້ເພື່ອບອກເຂດຫວ່າງດິນສາທາລະນະ ທີ່ຮັກສາໄວ້ເພື່ອປຸກຕົ້ນໄມ້ ແລະ ກໍ່ສ້າງລະບົບໂຄງລ່າງອື່ນໆທີ່ຈຳເປັນ;
9. ທາງສາຍເອກ ໝາຍເຖິງ ຖະໜົນສາຍສຳຄັນຂອງລະບົບການຈາລະຈອນຂອງຕົວເມືອງທັງໝົດ ທີ່ມີໜ້າທີ່ຮັບເອົາກະແສການຈາລະຈອນ ຈາກພາຍນອກເຂົ້າສູ່ຕົວເມືອງ ຫຼື ນຳເອົາກະແສການຈາລະຈອນໃນທາງກັບອອກຈາກຕົວເມືອງ;
10. ທາງສາຍຫຼັກ ໝາຍເຖິງ ຖະໜົນທີ່ມີໜ້າທີ່ ເຊື່ອມຕໍ່ການຈາລະຈອນຈາກຖະໜົນສາຍເອກກັບເຂດຕ່າງໆ ຂອງຕົວເມືອງເຊັ່ນ: ເຂດທີ່ຢູ່ອາໃສ, ເຂດການຄ້າໃຈກາງເມືອງ, ເຂດອຸດສະຫະກຳ ແລະ ຖືວ່າເປັນຖະໜົນທີ່ທຳໜ້າທີ່ເຊື່ອມຕໍ່ລະຫວ່າງ ຖະໜົນສາຍເອກ ແລະ ຖະໜົນສາຍເຊື່ອມຕໍ່ເຂົ້າກັນ;
11. ທາງສາຍເຊື່ອມ ໝາຍເຖິງ ຖະໜົນທີ່ມີໜ້າທີ່ກະຈາຍການຈາລະຈອນຈາກຖະໜົນສາຍຫຼັກ ເຂົ້າໄປພາຍໃນເຂດ ຫຼື ສະຖານທີ່ຕ່າງໆຂອງຕົວເມືອງ ແລະ ຖືວ່າເປັນຖະໜົນທີ່ທຳການເຊື່ອມຕໍ່ລະຫວ່າງຖະໜົນສາຍຫຼັກ ແລະ ຖະໜົນສາຍແຈກເຂົ້າກັນ;
12. ທາງສາຍແຈກ ໝາຍເຖິງ ຖະໜົນທີ່ຢູ່ໃນເຂດຄຸ້ມຕ່າງໆ ໂດຍມີໜ້າທີ່ເຊື່ອມຕໍ່ລະຫວ່າງຕອນດິນ, ອາຄານ, ສະຖານທີ່ຕ່າງໆ ກັບຖະໜົນສາຍເຊື່ອມຕໍ່;
13. ທາງຮ່ອມ ໝາຍເຖິງ ສຳລັບການສ້າງຕົວເມືອງໃໝ່ ຫຼື ຕົວເມືອງເກົ່າທີ່ເອື້ອອຳນວຍໃຫ້ຖືເອົາຖະໜົນສາຍແຈກ ຕິດຈອດກັບຕອນດິນໂດຍກົງ ຖ້າມີຄວາມຈຳເປັນຕ້ອງສ້າງທາງຮ່ອມ ຄວາມກວ້າງຂອງເຂດຈາລະຈອນຕ່ຳສຸດ ຕ້ອງໃຫ້ໄດ້ 6 ແມັດ. ໃນນັ້ນ ຄວາມຍາວສູງສຸດຂອງທາງຮ່ອມ ຕ້ອງບໍ່ເກີນ 50 ແມັດ ແລະ ສິ້ນສຸດຂອງທາງຕ້ອງບໍ່ເກີນ 50 ແມັດ ແລະ ສິ້ນສຸດຂອງທາງຕ້ອງມີບ່ອນຕ່າວກັບຄືນຂອງຍານພາຫະນະ.

ມາດຕາ 4 ນະໂຍບາຍຂອງລັດ

ອົງການປົກຄອງແຂວງ ຊຸກຍຸ້, ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດໃນຂອບເຂດພື້ນທີ່ເມືອງ ອຸທຸມພອນ ເຂົ້າຮ່ວມຢ່າງຕັ້ງໜ້າໃນການຄຸ້ມຄອງແຜນຜັງຕົວເມືອງ ອຸທຸມພອນ ແລະ ພັດທະນາທາງດ້ານເສດຖະກິດ-ສັງຄົມ ໃນຕົວເມືອງໃຫ້ມີການຂະຫຍາຍຕົວເປັນລະບົບຕໍ່ເນື່ອງ, ເຮັດໃຫ້ຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າດີຂຶ້ນເທື່ອລະກ້າວ. ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

ສົ່ງເສີມທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດລົງທຶນໃສ່ການສ້າງແຜນຜັງຕົວເມືອງ, ຜັງຈັດສັນຄຸ້ມໃໝ່, ການປົກປັກຮັກສາ ແລະ ນຳໃຊ້ສິ່ງປຸກສ້າງທີ່ມີເອກະລັກຂອງຊາດ, ທ້ອງຖິ່ນ ແລະ ເຜົ່າ, ບຸລະນະປະຕິສັງຂອນສິ່ງປຸກສ້າງ, ສະຖາປັດຕະຍະກຳ, ສິລະປະກຳ, ວັດທະນະທຳ ແລະ ພູມີທັດຂອງຕົວເມືອງອຸທຸມພອນ ໃຫ້ສວຍງາມ ລວມທັງການລົງທຶນໃສ່ການກໍ່ສ້າງລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ ເພື່ອຈັດຕັ້ງປະຕິບັດແຜນຜັງລວມ ແລະ ແຜນຜັງລະອຽດຂອງຕົວເມືອງອຸທຸມພອນ.

ຊຸກຍຸ້ ແລະ ສົ່ງເສີມ ໃຫ້ປະຊາຊົນໃນຕົວເມືອງ ອຸທຸມພອນ ມີຄວາມເຂົ້າໃຈ, ເຫັນໄດ້ຄວາມສຳຄັນ ແລະ ເປັນເຈົ້າການ ປະກອບສ່ວນເຂົ້າໃນການພັດທະນາ ພ້ອມທັງປົກປັກຮັກສາຕົວເມືອງໃຫ້ກາຍເປັນຕົວເມືອງທີ່ໜ້າຢູ່ ເປັນມິດກັບສິ່ງແວດລ້ອມ ແລະ ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ.

ມາດຕາ 5 ຫຼັກການເຄື່ອນໄຫວ

ຫຼັກການເຄື່ອນໄຫວ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ໃຫ້ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳແນະນຳ ແລະ ລະບຽບການຂອງລັດ ທີ່ໄດ້ກຳນົດໄວ້ຕາມແຕ່ລະໄລຍະຢ່າງເຂັ້ມງວດ;
2. ຮັບປະກັນການພັດທະນາຕົວເມືອງ ແລະ ການຂະຫຍາຍ ການຕັ້ງຖິ່ນຖານຂອງຊຸມຊົນ ໃນຕົວເມືອງ ອຸທຸມພອນ ຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ, ວັດທະນະທຳ, ປະຫວັດສາດ, ເອກະລັກທາງດ້ານສະຖາປັດຕະຍະກຳ, ສິລະປະກຳ ແລະ ທິວທັດຕົວເມືອງໃຫ້ມີຄວາມສວຍງາມ ແລະ ຍືນຍົງໃຫ້ໄປຕາມແຜນຍຸດທະສາດພັດທະນາຕົວເມືອງ, ແຜນຜັງຊີ້ນຳລວມ, ແຜນຜັງລະອຽດ ແລະ ລະບຽບໃນການຄຸ້ມຄອງຜັງເມືອງ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ ທີ່ໄດ້ປະກາດນຳໃຊ້ໃຫ້ເປັນຮຸບປະທຳ;
3. ຮັບປະກັນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນ ຂອງແຂວງ ແລະ ຜົນປະໂຫຍດໃນການດຳລົງຊີວິດຂອງປະຊາຊົນ;
4. ຮັບປະກັນທາງດ້ານການເມືອງໃຫ້ມີຄວາມຖືກຕ້ອງ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້.

ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທາງສັງຄົມທັງພາຍໃນ ແລະ ຕ່າງປະເທດທີ່ດຳລົງຊີວິດ ແລະ ດຳເນີນການເຄື່ອນໄຫວ ໃນຂອບເຂດພື້ນທີ່ຕົວເມືອງອຸທຸມພອນ ແຂວງ ສະຫວັນນະເຂດ.

ໝວດທີ 2
ເນື້ອທີ່ແຜນຜັງ ແລະ ການກຳນົດຂອງແຕ່ລະເຂດ

ມາດຕາ 7 ເນື້ອທີ່ແຜນຜັງ

ແຜນຜັງລວມຕົວເມືອງອຸທຸມພອນ ກວມເອົາເນື້ອທີ່ທັງໝົດ 2.477 ເຮັກຕາ, ມີ 13 ບ້ານ ປະກອບມີ ດັ່ງລຸ່ມນີ້:

1. ບ້ານ ໄຊອຸດົມ
2. ບ້ານ ໄຊຍະມຸງຄຸນ

3. ບ້ານ ອຸດົມມີໄຊ
4. ບ້ານ ວິງພັນສີ
5. ບ້ານ ຈັນທະລັງສີ
6. ບ້ານ ຈອມເພັດ
7. ບ້ານ ເຊໂນ
8. ບ້ານ ໄຊສົມບຸນ
9. ບ້ານ ມະນີວິງໄຊ
10. ບ້ານ ໄຊຍະເພັດ
11. ບ້ານ ຈະເລີນສຸກ
12. ບ້ານ ສີບຸນເຮືອງ
13. ບ້ານ ສະໜາມໄຊ

ມາດຕາ 8 ການກຳນົດຂອງແຕ່ລະເຂດ

ການກຳນົດຂອງແຕ່ລະເຂດແຜນຜັງເມືອງອຸທຸມພອນ ປະກອບມີ 8 ເຂດ ດັ່ງລຸ່ມນີ້:

- ເຂດໃຈກາງເມືອງ (UA) 175.67 ເຮັກຕາ;
- ເຂດອ້ອມຮອບໃຈກາງເມືອງ (UB) 213.08 ເຮັກຕາ;
- ເຂດຊານເມືອງ (UC) 902.86 ເຮັກຕາ;
- ເຂດຂະຫຍາຍຕົວເມືອງ (UD, UD2) 220.23 ເຮັກຕາ;
- ເຂດສະໜາມບິນ (TA) 63.40 ເຮັກຕາ;
- ເຂດເສດຖະກິດພິເສດ (I) 23.21 ເຮັກຕາ;
- ເຂດກະສິກຳ (NA) 842.15 ເຮັກຕາ;
- ເຂດປ່າໄມ້ ແລະ ທຳມະຊາດ (NE) 36.40 ເຮັກຕາ.

(ມີເອກະສານແຜນຜັງຕົວເມືອງອຸທຸມພອນ ຄັດຕິດມາພ້ອມ)

ມາດຕາ 9 ເຂດໃຈກາງເມືອງ (UA)

ເຂດໃຈກາງເມືອງ ກວມເອົາ 7 ບ້ານ ປະກອບມີ:

1. ບ້ານ ໄຊອຸດົມ;
2. ບ້ານ ໄຊຍະມຸງຄຸນ;
3. ບ້ານ ອຸດົມມີໄຊ;
4. ບ້ານ ວິງພັນສີ;
5. ບ້ານ ມະນີວິງໄຊ;
6. ບ້ານ ໄຊສົມບຸນ;
7. ບ້ານ ເຊໂນ;

1. **ລັກສະນະຂອງເຂດ:**

- ເປັນເຂດນຳໃຊ້ທີ່ດິນ ເພື່ອທີ່ຢູ່ອາໄສ, ການຄ້າ ແລະ ການບໍລິການປະປົນກັນ;
- ເຂດດັ່ງກ່າວນີ້ອະນຸຍາດໃຫ້ປຸກສ້າງທີ່ຢູ່ອາໄສລວມໝູ່ ແລະ ສ່ວນຕົວ;
- ເຂດດັ່ງກ່າວນີ້ ຫ້າມການປຸກສ້າງບັນດາກິດຈະການທີ່ເຮັດໃຫ້ມີສຽງເມືອງນັ່ນ ແລະ ມົນລະພິດ, ກິດຈະການດ້ານອຸດສະຫະກຳປະເພດ 1 ແລະ ສາງຂະໜາດໃຫຍ່;
- ເຂດນີ້ ຍັງມີຄວາມສາມາດເພີ້ມຄວາມໜາແໜ້ນໄດ້ ປະກອບກັນເປັນກຸ່ມກ້ອນ ຊຶ່ງມີການກໍ່ສ້າງໃນບໍລິເວນໃຈກາງບ້ານ, ພື້ນທີ່ກໍ່ສ້າງສາມາດຈັດສັນໄດ້.

- **ຈຸດພິເສດຂອງເຂດ:**

ເຂດດັ່ງກ່າວນີ້ເປັນເຂດທີ່ມີການປຸກສ້າງທີ່ໜາແໜ້ນກວ່າໝູ່, ເປັນພື້ນທີ່ໆມີສຳນັກງານ, ການຄ້າ, ມີທີ່ຢູ່ອາໄສ ແລະ ມີຮ້ານຂາຍເຄື່ອງຈຳນວນໜຶ່ງ, ເປັນເຂດການນຳໃຊ້ທີ່ດິນເປັນທີ່ຢູ່ອາໄສເປັນສ່ວນໃຫຍ່.

1. ຕົ້ນຕໍໃນການອະນຸຍາດທີ່ດິນເພື່ອ

- ອາຄານຫ້ອງການ, ສະຖານທີ່ປົກຄອງ ແລະ ລັດຖະການ;
- ຕະຫຼາດ, ອາຄານຮ້ານຄ້າ ແລະ ຮ້ານສັບພະສິນຄ້າ;
- ຮ້ານອາຫານ, ຮ້ານກິນດື່ມ, ໂຮງແຮມ ແລະ ສະຖານທີ່ບັນເທີງ;
- ອາຄານທີ່ພັກອາໄສ;
- ສະຖານີຈອດລົດໂດຍສານ, ລົດສາທາລະນະ ແລະ ອາຄານ ຫຼື ລານຈອດລົດ;
- ອາຄານສະຖານທີ່ສຳລັບສາສະໜາ, ວັດທະນະທຳ-ສັງຄົມ, ການສຶກສາ, ສາທາລະນະສຸກ, ການກິລາ ແລະ ພັກຜ່ອນ.

2. ກໍລະນີພິເສດສາມາດອານຸຍາດນຳໃຊ້ທີ່ດິນເພື່ອ

- ປ້ຳນ້ຳມັນ;
- ຄັງສິນຄ້າ ຫຼື ສາງຂະໜາດນ້ອຍ.

3. ທາງເຂົ້າອອກ ແລະ ເສັ້ນທາງ

- ຕອນດິນປຸກສ້າງໄດ້ ຈະຕ້ອງຕິດຈອດໂດຍກົງກັບເສັ້ນທາງສາທາລະນະ;
- ກໍລະນີເປັນຕອນດິນທີ່ບໍ່ຕິດຈອດໂດຍກົງກັບເສັ້ນທາງສາທາລະນະ ຕ້ອງໃຫ້ມີທາງຮ່ອມ ເພື່ອເຊື່ອມຕໍ່ຕອນດິນທີ່ບໍ່ຕິດຈອດກັບເສັ້ນທາງສາທາລະນະ;
- ທາງຮ່ອມຄວນມີຂອບເຂດຂອງທາງ ຢ່າງໜ້ອຍສຸດ 4 ແມັດ, ກໍລະນີເປັນທາງຮ່ອມສຸດຊ່ອງ ຈະຕ້ອງມີຄວາມຍາວບໍ່ເກີນ 50 ແມັດ, ຖ້າຫາກຍາວກວ່າ 50 ແມັດ ຕ້ອງມີຂອບເຂດຂອງທາງຢ່າງໜ້ອຍສຸດ 6 ແມັດ ພ້ອມທັງມີບ່ອນຕ່າວຄືນ ຂອງຍານພາຫະນະອີກດ້ວຍ.

4. ຕາໜ່າງໂຄງລ່າງເຕັກນິກ

- ຕອນດິນປຸກສ້າງໄດ້ຕ້ອງສາມາດເຊື່ອມຕໍ່ເຂົ້າໂດຍກົງກັບລະບົບຕາໜ່າງໂຄງລ່າງເຕັກນິກ ຂອງຕົວເມືອງ (ໂທລະຄົມ, ໄຟຟ້າ, ນ້ຳປະປາ ແລະ ລະບົບລະບາຍນ້ຳ);
- ກໍລະນີການເຊື່ອມຕໍ່ໃສ່ຕາໜ່າງເຕັກນິກດັ່ງກ່າວທີ່ຈະຜ່ານຕອນດິນຂອງກຳມະສິດອື່ນ ຈະເປັນທາງໃຕ້ດິນ, ໜ້າດິນ ຫຼື ທາງອາກາດ ກໍ່ຕ້ອງໄດ້ຮັບການເຫັນດີ ຈາກເຈົ້າຂອງກຳມະສິດນັ້ນເປັນລາຍລັກອັກສອນເສຍກ່ອນ ແລະ ໃຫ້ສອດຄ່ອງກັບມາດຕາ 49 ແລະ 50 ຂອງກົດໝາຍວ່າດ້ວຍກຳມະສິດ.

5. ຮູບຮ່າງລັກສະນະ ແລະ ຂະໜາດຂອງຕອນດິນ

ຕອນດິນທີ່ສາມາດປຸກສ້າງໄດ້ຈະຕ້ອງມີຄວາມກ້ວາງຢ່າງໜ້ອຍ 4 ແມັດ ແລະ ມີເນື້ອທີ່ຕອນດິນຢ່າງໜ້ອຍ 90 ມ^2.

6. ການຕັ້ງອາຄານທຽບໃສ່ຖະໜົນຢູ່ໃນເຂດການຈັດສັນລະອຽດ

- ການຕັ້ງອາຄານຕ້ອງຕັ້ງຕາມເສັ້ນແຖວທີ່ກຳນົດໄວ້;
- ໃນກໍລະນີບໍ່ທັນໄດ້ກຳນົດເສັ້ນແຖວການປຸກສ້າງໄວ້ໃຫ້ຕັ້ງອາຄານໄວ້ຢຸ່ຂອບເຂດຂອງທາງ ຊຶ່ງຢ່າງໜ້ອຍໄລຍະຫ່າງຫາຂອບທາງແຕ່ລະປະເພດມີດັ່ງນີ້:

1) ທາງສາຍເອກຫ່າງຈາກຂອບທາງ	ໄລຍະ 6 ແມັດ;
2) ທາງສາຍຫຼັກຫ່າງຈາກຂອບທາງ	ໄລຍະ 5 ແມັດ;
3) ທາງສາຍເຊື່ອມຫ່າງຈາກຂອບທາງ	ໄລຍະ 4 ແມັດ;
4) ທາງສາຍແຈກ (ທາງພາຍໃນບ້ານ)ຫ່າງຈາກຂອບທາງ	ໄລຍະ 3 ແມັດ;
5) ທາງຮ່ອມ (ທາງທີ່ບໍ່ໄດ້ກຳນົດໃນແຜນຜັງ)ຫ່າງຈາກຂອບທາງ	ໄລຍະ 2 ແມັດ.

- ໃນກໍລະນີ ການປຸກສ້າງຫາກນອນໃນເຂດສະຫງວນທາງຫຼວງ ແມ່ນໃຫ້ປະຕິບັດຕາມກົດໝາຍທາງຫຼວງ.
- ບໍລິເວນມຸມຖະໜົນຂອງຈຸດທາງຄົບ, ທາງແຍກ, ອາຄານ ຫຼື ສິ່ງກໍ່ສ້າງ ຕ້ອງຕັ້ງຢຸ່ນອກບໍລິເວນ ເຂດແນມເຫັນຂອງທາງ. ບໍລິເວນແນມເຫັນດັ່ງກ່າວຕ້ອງປາດໃຫ້ມີມຸມ 135 ອົງສາ ໂດຍໃຫ້ເສັ້ນປາດ ດັ່ງກ່າວໃຫ້ມີຄວາມຍາວຢ່າງໜ້ອຍ 4 ແມັດ ຫຼື ເຮັດໃຫ້ມີມຸມດຽວກັນກັບມຸມໂຄ້ງຂອງຖະໜົນ.

7. ການຕັ້ງອາຄານທຽບໃສ່ເຂດແດນຕອນດິນ

- ອາຄານທີ່ກໍ່ສ້າງຕ້ອງມີຄວາມສູງ ບໍ່ກາຍ 50 ແມັດ ແລະ ມີໄລຍະຫ່າງອາຄານ ຫາ ເຂດແດນຕອນດິນໃນ ແຕ່ລະດ້ານຂອງຕອນດິນຢ່າງໜ້ອຍຕ້ອງເທົ່າກັບ 1 2 ຄວາມສູງຂອງອາຄານ, ແຕ່ບໍ່ໃຫ້ຫຼຸດ 2 ແມັດ, ກໍລະນີອາຄານກໍ່ສ້າງທີ່ຕັ້ງຕິດໂດຍກົງກັບທາງສາທາລະນະ ໄລຍະຫ່າງດ້ານໜ້າ ໃຫ້ປະຕິບັດຕາມຂໍ້ 7;
- ສາມາດປຸກສ້າງອາຄານໃໝ່ຕິດແປະກັບອາຄານຂ້າງຄຽງທີ່ມີຢູ່ແລ້ວໄດ້, ຖ້າຫາກວ່າດ້ານຂ້າງຂອງອາຄານ ນັ້ນບໍ່ມີປ່ອງຢ້ຽມ ຫຼື ປ່ອງລະບາຍອາກາດ ແລະ ເມື່ອປຸກສ້າງຕິດກັບຜູ້ຢູ່ຂ້າງຄຽງແລ້ວມີລວງ ຍາວຮ່ວມ ກັນທັງໝົດບໍ່ໃຫ້ກາຍ 50 ແມັດ.

8. ການຕັ້ງອາຄານຫຼາຍຫຼັງໃນຕອນດິນດຽວກັນ

- ອາຄານທີ່ຢູ່ໃນຕອນດິນດຽວກັນ ຈະຕ້ອງຫ່າງກັນຢ່າງໜ້ອຍ ເທົ່າກັບຄວາມສູງຂອງອາຄານທີ່ສູງກວ່າ ແຕ່ບໍ່ ໃຫ້ຫຼຸດ 4 ແມັດ.

9. ຮົ້ວ ຫຼື ກາເພງ

- ລວງສູງດ້ານໜ້າບໍ່ໃຫ້ກາຍ 3 ແມັດ ທຽບໃສ່ລະດັບໜ້າດິນຂອງຕອນດິນ;
- ດ້ານທີ່ຕິດກັບເສັ້ນທາງສາທາລະນະໃຫ້ສາມາດສ່ອງຊອດ ແລະ ແນມເຫັນດ້ານໃນຢ່າງສະດວກ;
- ຮົ້ວດ້ານຂ້າງ ແລະ ດ້ານຫຼັງສາມາດກໍ່ຕັນ ແລະ ສູງບໍ່ເກີນ 2 ແມັດ;
- ໃນພາກປະຕິບັດຕົວຈິງ ອາຄານ ຫຼື ສະຖານທີ່ໃດຄວນມີຮົ້ວ ຫຼື ບໍ່ມີຮົ້ວ ຫຼື ກຳແພງນັ້ນຈະໄດ້ ແນະນຳ ລະອຽດຕື່ມ;

10. ສະຖານທີ່ຈອດຍານພາຫະນະ

ສະຖານທີ່ຈອດຍານພາຫະນະຕ້ອງຢຸ່ນອກຂອບເຂດຂອງທາງ ແລະ ຜູ້ກໍ່ສ້າງໄດ້ຮັບສິດນຳໃຊ້ ຊຶ່ງຢ່າງ ໜ້ອຍຕ້ອງມີ ຈຳນວນບ່ອນຈອດລົດດັ່ງຕໍ່ໄປນີ້:

- ອາຄານທີ່ຢູ່ອາໄສແບບລວມໝູ່ ບ່ອນຈອດ 1 ບ່ອນຕໍ່ 2 ຄອບຄົວ;
- ໂຮງແຮມ 1 ບ່ອນຈອດຕໍ່ 3 ຫ້ອງພັກ;
- ໂຮງຮຽນ, ຫ້ອງການ, ທະນາຄານ ບ່ອນຈອດລົດ 1 ບ່ອນຕໍ່ 20 $ม^2$ ຂອງພື້ນທີ່ນຳໃຊ້;
- ຮ້ານອາຫານ, ຮ້ານບັນເທີງ ບ່ອນຈອດ 1 ບ່ອນຕໍ່ 4 $ม^2$ ຂອງພື້ນທີ່ນຳໃຊ້;
- ຕະຫຼາດ, ຮ້ານຄ້າ ບ່ອນຈອດ 1 ບ່ອນຕໍ່ 10 $ม^2$ ຂອງພື້ນທີ່ນຳໃຊ້.
- ສຳລັບສະຖານີລົດໂດຍສານ ແລະ ລົດຂົນສົ່ງ ແມ່ນມີມາດຕະຖານສະຖານີລົດ ແລະ ລະບຽບກຳນົດ ສະເພາະທີ່ກຳນົດໄວ້.

ມາດຕາ 10 ເຂດອ້ອມຮອບໃຈກາງເມືອງ (UB)

ເຂດອ້ອມຮອບໃຈກາງເມືອງ ກວມເອົາ 10 ບ້ານ ປະກອບມີ:

1. ບ້ານ ໄຊຍະມຸງຄຸນ;
2. ບ້ານ ອຸດົມມີໄຊ;
3. ບ້ານ ວິງພັນສີ;
4. ບ້ານ ຈັນທະລັງສີ;
5. ບ້ານ ຈອມເພັດ;
6. ບ້ານ ໄຊສົມບຸນ;
7. ບ້ານ ມະນີວົງໄຊ;
8. ບ້ານ ໄຊຍະເພັດ;
9. ບ້ານ ໄຊອຸດົມ;
10. ບ້ານ ຈະເລີນສຸກ.

1. ລັກສະນະຂອງເຂດ:

- ເປັນເຂດນຳໃຊ້ທີ່ດິນ ເພື່ອຢູ່ອາໄສ, ການຄ້າ ແລະ ການບໍລິການປະປົນກັນ;
- ເຂດດັ່ງກ່າວນີ້ອະນຸຍາດໃຫ້ປຸກສ້າງທີ່ຢູ່ອາໄສລວມໝູ່ ແລະ ສ່ວນຕົວ;

- ເຂດດັ່ງກ່າວນີ້ ຫ້າມການປຸກສ້າງບັນດາກິດຈະການທີ່ເຮັດໃຫ້ມີສຽງເນືອງນັນ ແລະ ມົນລະພິດ, ກິດຈະການດ້ານອຸດສະຫະກຳປະເພດ I ແລະ ສາງຂະໜາດໃຫຍ່;
- ເຂດນີ້ ຍັງມີຄວາມສາມາດເພີ່ມຄວາມໜາແໜ້ນໄດ້ ປະກອບກັນເປັນກຸ່ມກ້ອນ ຊຶ່ງມີການກໍ່ສ້າງໃນບໍລິເວນໃຈກາງບ້ານ, ພື້ນທີ່ກໍ່ສ້າງສາມາດຈັດສັນໄດ້.
- **ຈຸດພິເສດຂອງເຂດ:**

ເຂດດັ່ງກ່າວນີ້ ເປັນເຂດທີ່ມີການປຸກສ້າງຈຳນວນໜຶ່ງແລ້ວ, ມັນຍັງມີທີ່ພັກອາໄສ ແລະ ມີຮ້ານຂາຍເຄື່ອງຈຳນວນໜຶ່ງ, ເປັນເຂດການນຳໃຊ້ທີ່ດິນເປັນທີ່ຢູ່ອາໄສເປັນສ່ວນໃຫຍ.

2. ຕົ້ນຕໍໃນການອະນຸຍາດທີ່ດິນເພື່ອ

- ອາຄານທີ່ພັກອາໄສ;
- ອາຄານສະຖານທີ ເພື່ອການປົກຄອງ ແລະ ລັດຖະການ;
- ອາຄານກິດຈະການຮັບໃຊ້ຄົວເຮືອນບ້ານດັ່ງກ່າວເຊັ່ນ: ຮ້ານຄ້າຍ່ອຍ, ຮ້ານກິນດື່ມນ້ອຍ, ຮ້ານຫັດຖະກຳ, ບໍລິການສ້ອມແປງທີ່ບໍ່ລົບກວນ ແລະ ບໍ່ມີມົນລະພິດຕໍ່ຊຸມຊົນ ແລະ ສິ່ງແວດລ້ອມ;
- ອາຄານສະຖານທີ່ສຳລັບສາສະໜາ, ວັດທະນະທຳ-ສັງຄົມ, ການສຶກສາ, ສາທາລະນະສຸກ, ການກິລາ ແລະ ພັກຜ່ອນ.

3. ກໍລະນີພິເສດສາມາດອານຸຍາດນາໃຊ້ທີ່ດິນເພື່ອ

- ໂຮງແຮມ, ປ້ຳນ້ຳມັນ;
- ຄັງສິນຄ້າ ຫຼື ສາງຂະໜາດນ້ອຍ ແລະ ຂະໜາດກາງ;
- ໂຮງງານປະເພດ 3.

4. ທາງເຂົ້າອອກ ແລະ ເສັ້ນທາງ

- ຕອນດິນປຸກສ້າງໄດ້ ຈະຕ້ອງຕິດຈອດໂດຍກົງກັບເສັ້ນທາງສາທາລະນະ;
- ກໍລະນີເປັນຕອນດິນທີ່ບໍ່ຕິດຈອດໂດຍກົງກັບເສັ້ນທາງສາທາລະນະ ຕ້ອງໃຫ້ມີທາງຮ່ອມ ເພື່ອເຊື່ອມຕໍ່ຕອນດິນທີ່ບໍ່ຕິດຈອດກັບເສັ້ນທາງສາທາລະນະ;
- ທາງຮ່ອມຄວນມີຂອບເຂດຂອງທາງ ຢ່າງໜ້ອຍສຸດ 4 ແມັດ, ກໍລະນີເປັນທາງຮ່ອມສຸດຊ່ອງ ຈະຕ້ອງມີຄວາມຍາວບໍ່ເກີນ 50 ແມັດ, ຖ້າຫາກຍາວກວ່າ 50 ແມັດ ຕ້ອງມີຂອບເຂດຂອງທາງ ຢ່າງໜ້ອຍສຸດ 6 ແມັດ ພ້ອມທັງມີບ່ອນຕ່າວຄືນ ຂອງຍານພາຫະນະອີກດ້ວຍ ໂດຍສອດຄ່ອງກັບມາດຕາ 49 ຂອງກິດໝາຍວ່າດ້ວຍກຳມະສິດ.

5. ຕາໜ່າງໂຄງລ່າງເຕັກນິກ

- ຕອນດິນປຸກສ້າງໄດ້ ຕ້ອງສາມາດເຊື່ອມຕໍ່ເຂົ້າໂດຍກົງກັບລະບົບຕາໜ່າງໂຄງລ່າງເຕັກນິກຂອງຕົວເມືອງ (ໂທລະຄົມ, ໄຟຟ້າ, ນ້ຳປະປາ ແລະ ລະບົບລະບາຍນ້ຳ);
- ກໍລະນີການເຊື່ອມຕໍ່ໃສ່ຕາໜ່າງເຕັກນິກດັ່ງກ່າວທີ່ຈະຜ່ານຕອນດິນຂອງກຳມະສິດອື່ນຈະເປັນທາງໃຕ້ດິນ, ໜ້າດິນ ຫຼື ທາງອາກາດ ກໍ່ຕ້ອງໄດ້ຮັບການເຫັນດີ ຈາກເຈົ້າຂອງກຳມະສິດນັ້ນເປັນລາຍລັກອັກສອນເສຍກ່ອນ ແລະ ໃຫ້ສອດຄ່ອງກັບມາດຕາ 49 ແລະ 50 ຂອງກິດໝາຍວ່າດ້ວຍກຳມະສິດ.

6. ຮູບຮ່າງລັກສະນະ ແລະ ຂະໜາດຂອງຕອນດິນ

ຕອນດິນທີ່ສາມາດປຸກສ້າງໄດ້ຈະຕ້ອງມີຄວາມກວ້າງຢ່າງໜ້ອຍ 4 ແມັດ ມີເນື້ອທີ່ຕອນດິນຢ່າງໜ້ອຍ 100 $ม^2$.

7. ການຕັ້ງອາຄານທຽບໃສ່ຖະໜົນຢູ່ໃນເຂດການຈັດສັນລະອຽດ

- ການຕັ້ງອາຄານຕ້ອງຕັ້ງຕາມເສັ້ນແຖວທີ່ກຳນົດໄວ້;
- ໃນກໍລະນີບໍ່ທັນໄດ້ກຳນົດເສັ້ນແຖວການປຸກສ້າງໄວ້ໃຫ້ຕັ້ງອາຄານໄວ້ຢູ່ຂອບເຂດຂອງທາງ ຊຶ່ງຢ່າງໜ້ອຍໄລຍະຫ່າງຫາຂອບທາງແຕ່ລະປະເພດມີດັ່ງນີ້:

1) ທາງສາຍເອກຫ່າງຈາກຂອບທາງ	ໄລຍະ 6 ແມັດ;
2) ທາງສາຍຫຼັກຫ່າງຈາກຂອບທາງ	ໄລຍະ 5 ແມັດ;
3) ທາງສາຍເຊື່ອມຫ່າງຈາກຂອບທາງ	ໄລຍະ 4 ແມັດ;

4) ທາງສາຍແຈກ (ທາງພາຍໃນບ້ານ)ຫ່າງຈາກຂອບທາງ ໄລຍະ 3 ແມັດ;

5) ທາງຮ່ອມ (ທາງທີ່ບໍ່ໄດ້ກຳນົດໃນແຜນຜັງ)ຫ່າງຈາກຂອບທາງ ໄລຍະ 2 ແມັດ;

- ໃນກໍລະນີ ການປຸກສ້າງຫາກນອນໃນເຂດສະຫງວນທາງຫຼວງ ແມ່ນໃຫ້ປະຕິບັດຕາມກົດໝາຍທາງຫຼວງ.
- ບໍລິເວນມຸມຖະໜົນຂອງຈຸດທາງຄົບ, ທາງແຍກ, ອາຄານ ຫຼື ສິ່ງກໍ່ສ້າງ ຕ້ອງຕັ້ງຢູ່ນອກບໍລິເວນເຂດ ແນມເຫັນຂອງທາງ, ບໍລິເວນແນມເຫັນດັ່ງກ່າວຕ້ອງປາດໃຫ້ມີມຸມ 135 ອົງສາ ໂດຍໃຫ້ເສັ້ນປາດ ດັ່ງກ່າວໃຫ້ມີຄວາມຍາວຢ່າງໜ້ອຍ 4 ແມັດ ຫຼື ເຮັດໃຫ້ມີມຸມດຽວກັນກັບມຸມໂຄ້ງຂອງຖະໜົນ.

8. ການຕັ້ງອາຄານທຽບໃສ່ເຂດແດນຕອນດິນ

- ອາຄານທີ່ກໍ່ສ້າງຕ້ອງມີຄວາມຍາວສູງສຸດບໍ່ກາຍ 50 ແມັດ ແລະ ມີໄລຍະຫ່າງອາຄານ ຫາ ເຂດແດນຕອນດິນໃນແຕ່ລະດ້ານຂອງຕອນດິນ ຢ່າງໜ້ອຍຕ້ອງເທົ່າກັບ 1/2 ຂອງຄວາມສູງຂອງອາຄານ, ແຕ່ບໍ່ໃຫ້ຫຼຸດ 2 ແມັດ, ກໍລະນີອາຄານກໍ່ສ້າງທີ່ຕັ້ງຕິດໂດຍກົງກັບທາງສາທາລະນະໄລຍະຫ່າງດ້ານໜ້າໃຫ້ ປະຕິບັດຕາມຂໍ້ 7;
- ສາມາດປຸກສ້າງອາຄານໃໝ່ຕິດແປະກັບອາຄານຂ້າງຄຽງທີ່ມີຢູ່ແລ້ວໄດ້, ຖ້າຫາກວ່າດ້ານຂ້າງຂອງອາຄານນັ້ນບໍ່ມີປ່ອງຢ້ຽມ ຫຼື ປ່ອງລະບາຍອາກາດ ແລະ ເມື່ອປຸກສ້າງຕິດກັບຜູ້ຢູ່ຂ້າງຄຽງແລ້ວມີລວຍຍາວຮ່ວມກັນທັງໝົດບໍ່ໃຫ້ກາຍ 50 ແມັດ;

9. ການຕັ້ງອາຄານຫຼາຍຫຼັງໃນຕອນດິນຕອນດຽວກັນ

ອາຄານທີ່ຢູ່ໃນຕອນດິນດຽວກັນ ຈະຕ້ອງຫ່າງກັນຢ່າງໜ້ອຍ ເທົ່າກັບຄວາມສູງຂອງອາຄານທີ່ສູງກ່ວາ ແຕ່ບໍ່ໃຫ້ຫຼຸດ 4 ແມັດ.

10. ຮົ້ວ ຫຼື ກຳແພງ

- ລວງສູງດ້ານໜ້າບໍ່ໃຫ້ກາຍ 3 ແມັດ ທຽບໃສ່ລະດັບໜ້າດິນຂອງຕອນດິນ, ສ່ວນທີ່ກໍ່ຕັນບໍ່ໃຫ້ສູງເກີນ 80 ຊັງຕີແມັດ;
- ດ້ານທີ່ຕິດກັບເສັ້ນທາງສາທາລະນະໃຫ້ສາມາດສ່ອງຊອດ ແລະ ແນມເຫັນດ້ານໃນຢ່າງສະດວກ;
- ຮົ້ວດ້ານຂ້າງ ແລະ ດ້ານຫຼັງສາມາດກໍ່ຕັນ ແລະ ສູງບໍ່ເກີນ 2 ແມັດ;
- ໃນພາກປະຕິບັດຕົວຈິງ ອາຄານ ຫຼື ສະຖານທີ່ໃດຄວນມີຮົ້ວ, ບໍ່ມີຮົ້ວ ແລະ ກຳແພງ ນັ້ນຈະໄດ້ແນະນຳລະອຽດຕື່ມ.

11. ສະຖານທີ່ຈອດຍານພາຫະນະ

ສະຖານທີ່ຈອດຍານພາຫະນະຕ້ອງຢູ່ນອກຂອບເຂດຂອງທາງ ແລະ ຜູ້ກໍ່ສ້າງໄດ້ຮັບສິດນຳໃຊ້ ຊຶ່ງຢ່າງໜ້ອຍຕ້ອງມີຈຳນວນບ່ອນຈອດລົດດັ່ງຕໍ່ໄປນີ້:

1) ອາຄານທີ່ຢູ່ອາໄສແບບລວມໝູ່ ບ່ອນຈອດ 1 ບ່ອນຕໍ່ 2 ຄອບຄົວ;
2) ໂຮງແຮມ 1 ບ່ອນຈອດຕໍ່ 3 ຫ້ອງພັກ;
3) ໂຮງຮຽນ, ຫ້ອງການ, ທະນາຄານ ບ່ອນຈອດລົດ 1 ບ່ອນຕໍ່ 20 $ม^2$ ຂອງພື້ນທີ່ນຳໃຊ້;
4) ຮ້ານອາຫານ, ຮ້ານບັນເທີງ ບ່ອນຈອດ 1 ບ່ອນຕໍ່ 4 $ม^2$ ຂອງພື້ນທີ່ນຳໃຊ້;
5) ຕະຫຼາດ, ຮ້ານຄ້າ ບ່ອນຈອດ 1 ບ່ອນຕໍ່ 10 $ม^2$ ຂອງພື້ນທີ່ນຳໃຊ້.

ມາດຕາ 11 ເຂດຊານເມືອງ (UC)

ເຂດຊານເມືອງ ກວມເອົາ 12 ບ້ານ ປະກອບມີ:

1. ບ້ານ ໄຊອຸດົມ;
2. ບ້ານ ໄຊຍະມຸງຄຸນ;
3. ບ້ານ ອຸດົມມີໄຊ;
4. ບ້ານ ວິງພັນສີ;
5. ບ້ານ ຈັນທະລັງສີ;
6. ບ້ານ ຈອມເພັດ;
7. ບ້ານ ໄຊສົມບຸນ;
8. ບ້ານ ມະນີວົງໄຊ;

9. ບ້ານ ໄຊຍະເພັດ;
10. ບ້ານ ຈະເລີນສຸກ;
11. ບ້ານ ສີບຸນເຮືອງ;
12. ບ້ານ ສະໝາມໄຊ.

1. ລັກສະນະຂອງເຂດ:

- ເປັນເຂດນຳໃຊ້ທີ່ດິນເພື່ອທີ່ຢູ່ອາໄສເປັນສ່ວນໃຫຍ່;
- ເຂດດັ່ງກ່າວນີ້ອະນຸຍາດໃຫ້ປຸກສ້າງທີ່ຢູ່ອາໄສລວມໝູ່ ແລະ ສ່ວນຕົວ;
- ເຂດດັ່ງກ່າວນີ້ ຫ້າມການປຸກສ້າງບັນດາກິດຈະການທີ່ເຮັດໃຫ້ມີສຽງເມືອງນັ່ນ ແລະ ມົນລະພິດ, ກິດຈະການດ້ານອຸດສະຫະກຳປະເພດ 1 ແລະ ສາງຂະໜາດໃຫຍ່; ເຂດນີ້ ຍັງມີຄວາມສາມາດເພີ່ມຄວາມໜາແໜ້ນໄດ້ ປະກອບກັນເປັນກຸ່ມກ້ອນ ເຊິ່ງມີການກໍ່ສ້າງໃນບໍລິເວນໃຈກາງບ້ານ, ພື້ນທີ່ກໍ່ສ້າງສາມາດຈັດສັນໄດ້.

- **ຈຸດພິເສດຂອງເຂດ:**

ເຂດດັ່ງກ່າວນີ້ ເປັນເຂດທີ່ມີການປຸກສ້າງຈຳນວນໜຶ່ງແລ້ວ, ມັນຍັງມີທີ່ພັກອາໄສ ແລະ ມີຮ້ານຂາຍເຄື່ອງຈຳນວນໜຶ່ງ. ເປັນເຂດການນຳໃຊ້ທີ່ດິນເປັນທີ່ຢູ່ອາໄສເປັນສ່ວນໃຫຍ່.

2. ຕົ້ນຕໍໃນການອະນຸຍາດທີ່ດິນເພື່ອ

- ອາຄານທີ່ພັກອາໄສ;
- ອາຄານກິດຈະການຮັບໃຊ້ຄຸ້ມບ້ານດັ່ງກ່າວເຊັ່ນ: ຮ້ານຄ້າຍ່ອຍ, ຮ້ານກິນດື່ມນ້ອຍ, ຮ້ານຫັດຖະກຳ, ບໍລິການສ້ອມແປງທີ່ບໍ່ລົບກວນ ແລະ ບໍ່ມີມົນລະພິດຕໍ່ຊຸມຊົນ ແລະ ສິ່ງແວດລ້ອມ;
- ອາຄານສະຖານທີ່ສຳລັບສາດສະໜາ, ວັດທະນະທຳ-ສັງຄົມ, ການສຶກສາ, ສາທາລະນະສຸກ, ການກິລາ ແລະ ພັກຜ່ອນ.

3. ກໍລະນີພິເສດສາມາດອະນຸຍາດນຳໃຊ້ທີ່ດິນເພື່ອ

- ອາຄານສະຖານທີ່ ເພື່ອການປົກຄອງ ແລະ ລັດຖະການ;
- ໂຮງແຮມ;
- ປ້ຳນ້ຳມັນ;
- ຄັງສິນຄ້າ ຫຼື ສາງຂະໜາດນ້ອຍ ແລະ ຂະໜາດກາງ;
- ໂຮງງານຂະໜາດນ້ອຍປະເພດ 1 ແລະ 3;
- ສວນພືດຜັກ.
- ຖ້າຫາກວ່າການຂະຫຍາຍຂອງຕົວເມືອງ ຫາກຕິດພັນກັບການຂະຫຍາຍເນື້ອທີ່ດິນຂອງພາກສ່ວນທີ່ກ່ຽວຂ້ອງທີ່ຈະພັດທະນາ ໃນແຕ່ລະໄລຍະ ຕ້ອງປະສານຫາພາກສ່ວນກ່ຽວຂ້ອງເພື່ອຄົ້ນຄວ້າ ແລະ ພິຈາລະນາ.

4. ທາງເຂົ້າອອກ ແລະ ເສັ້ນທາງ

- ຕອນດິນປຸກສ້າງໄດ້ ຈະຕ້ອງຕິດຈອດໂດຍກົງກັບເສັ້ນທາງສາທາລະນະ;
- ກໍລະນີເປັນຕອນດິນທີ່ບໍ່ຕິດຈອດໂດຍກົງກັບເສັ້ນທາງສາທາລະນະ ຕ້ອງໃຫ້ມີທາງຮ່ອມ ເພື່ອເຊື່ອມຕໍ່ຕອນດິນທີ່ບໍ່ຕິດຈອດກັບເສັ້ນທາງສາທາລະນະ;
- ທາງຮ່ອມຄອນມີຂອບເຂດຂອງທາງ ຢ່າງໜ້ອຍສຸດ 4 ແມັດ, ກໍລະນີເປັນທາງຮ່ອມສຸດຊ່ອງຈະຕ້ອງມີຄວາມຍາວບໍ່ເກີນ 50 ແມັດ, ຖ້າຫາກຍາວກ່ວາ 50 ແມັດ ຕ້ອງມີຂອບເຂດຂອງທາງຢ່າງໜ້ອຍສຸດ 6 ແມັດ ພ້ອມທັງມີບ່ອນຕ່າວຄືນ ຂອງຍານພາຫະນະອີກດ້ວຍ ໂດຍສອດຄ່ອງກັບມາດຕາ 49 ຂອງກົດໝາຍວ່າດ້ວຍກຳມະສິດ.

5. ຕາໜ່າງໂຄງລ່າງເຕັກນິກ

- ຕອນດິນປຸກສ້າງໄດ້ ຕ້ອງສາມາດເຊື່ອມຕໍ່ເຂົ້າໂດຍກົງກັບລະບົບຕາໜ່າງໂຄງລ່າງເຕັກນິກຂອງຕົວເມືອງ (ໂທລະຄົມ, ໄຟຟ້າ, ນ້ຳປະປາ ແລະ ລະບົບລະບາຍນ້ຳ);

- ກໍລະນີການເຊື່ອມຕໍ່ໃສ່ຕາໜ່າງເຕັກນິກດັ່ງກາວທີ່ຈະຜານຕອນດິນຂອງກໍາມະສິດອື່ນຈະເປັນທາງໃຕ້ດິນ, ໜ້າດິນ ຫຼື ທາງອາກາດກໍ່ຕ້ອງໄດ້ຮັບການເຫັນດີ ຈາກເຈົ້າຂອງກໍາມະສິດນັ້ນເປັນລາຍລັກອັກສອນເສຍກ່ອນ ແລະ ໃຫ້ສອດຄ່ອງກັບມາດຕາ 49 ແລະ 50 ຂອງກົດໝາຍວ່າດ້ວຍກໍາມະສິດ.

6. ຮູບຮ່າງລັກສະນະ ແລະ ຂະໜາດຂອງຕອນດິນ

ຕອນດິນທີ່ສາມາດປຸກສ້າງໄດ້ຈະຕ້ອງມີຄວາມກ້ວາງ ຢ່າງໜ້ອຍ 4 ແມັດ ແລະ ມີເນື້ອທີ່ຕອນດິນຢ່າງໜ້ອຍ 120 ມ^2.

7. ການຕັ້ງອາຄານທຽບໃສ່ຖະໜົນຢູ່ໃນເຂດການຈັດສັນລະອຽດ

- ການຕັ້ງອາຄານຕ້ອງຕັ້ງຕາມເສັ້ນແຖວທີ່ກໍານົດໄວ້;
- ໃນກໍລະນີບໍ່ທັນໄດ້ກໍານົດເສັ້ນແຖວການປຸກສ້າງໄວ້ໃຫ້ຕັ້ງອາຄານໄວ້ຢູ່ຂອບເຂດຂອງທາງ ຊຶ່ງຢ່າງໜ້ອຍໄລຍະຫ່າງຫາຂອບທາງແຕ່ລະບະເພດມີດັ່ງນີ້:

1) ທາງສາຍເອກຫ່າງຈາກຂອບທາງ	ໄລຍະ 6 ແມັດ
2) ທາງສາຍຫຼັກຫ່າງຈາກຂອບທາງ	ໄລຍະ 5 ແມັດ
3) ທາງສາຍເຊື່ອມຫ່າງຈາກຂອບທາງ	ໄລຍະ 4 ແມັດ
4) ທາງສາຍແຈກ (ທາງພາຍໃນບ້ານ)ຫ່າງຈາກຂອບທາງ	ໄລຍະ 3 ແມັດ
5) ທາງຮ່ອມ (ທາງທີ່ບໍ່ໄດ້ກໍານົດໃນແຜນຜັງ)ຫາງຈາກຂອບທາງ	ໄລຍະ 2 ແມັດ

- ໃນກໍລະນີ ການປຸກສ້າງຫາກນອນໃນເຂດສະຫງວນທາງຫຼວງ ແມ່ນໃຫ້ປະຕິບັດຕາມກົດໝາຍທາງຫຼວງ.
- ບໍລິເວນມຸມຖະໜົນຂອງຈຸດທາງຄົບ, ທາງແຍກ, ອາຄານ ຫຼື ສິ່ງກໍ່ສ້າງ ຕ້ອງຕັ້ງຢູ່ນອກບໍລິເວນ ເຂດແນມເຫັນຂອງທາງ, ບໍລິເວັນແນມເຫັນດັ່ງກ່າວຕ້ອງປາດໃຫ້ມີມຸມ 135 ອົງສາ ໂດຍໃຫ້ເສັ້ນປາດ ດັ່ງກ່າວໃຫ້ມີຄວາມຍາວຢ່າງໜ້ອຍ 4 ແມັດ ຫຼື ເຮັດໃຫ້ມີມຸມດຽວກັນກັບມຸມໂຄ້ງຂອງຖະໜົນ.

8. ການຕັ້ງອາຄານທຽບໃສ່ເຂດແດນຕອນດິນ

- ອາຄານທີ່ກໍ່ສ້າງຕ້ອງມີຄວາມສູງ ບໍ່ກາຍ 50 ແມັດ ແລະ ມີໄລຍະຫ່າງອາຄານ ຫາ ເຂດແດນ ຕອນດິນໃນແຕ່ລະດ້ານຂອງຕອນດິນຢ່າງໜ້ອຍຕ້ອງເທົ່າກັບ 1/2 ຂອງຄວາມສູງຂອງອາຄານ, ແຕ່ບໍ່ໃຫ້ຫຼຸດ 2 ແມັດ, ກໍລະນີອາຄານກໍ່ສ້າງທີ່ຕັ້ງຕິດໂດຍກົງກັບທາງສາທາລະນະໄລຍະຫ່າງດ້ານໜ້າໃຫ້ ປະຕິບັດຕາມຂໍ້ 7;
- ສາມາດປຸກສ້າງອາຄານໃໝ່ຕິດແປະກັບອາຄານຂ້າງຄຽງທີ່ມີຢູແລ້ວໄດ້, ຖ້າຫາກວ່າດ້ານຂ້າງຂອງອາຄານນັ້ນ ບໍ່ມີປ່ອງຢ້ຽມ ຫຼື ປ່ອງລະບາຍອາກາດ ແລະ ເມື່ອປຸກສ້າງຕິດກັບຜູ້ຢູ່ຂ້າງຄຽງແລ້ວມີລວງຍາວຮ່ວມກັນທັງໝົດບໍ່ໃຫ້ກາຍ 50 ແມັດ.

9. ການຕັ້ງອາຄານຫຼາຍຫຼັງໃນຕອນດິນຕອນດຽວກັນ

ອາຄານທີ່ຢູ່ໃນຕອນດິນດຽວກັນຈະຕ້ອງຫ່າງກັນຢ່າງໜ້ອຍເທົ່າກັບຄວາມສູງຂອງອາຄານທີ່ສູງກ່ວາແຕ່ບໍ່ໃຫ້ຫຼຸດ 4 ແມັດ.

10. ຮົ້ວ ຫຼື ກໍາແພງ

- ລວງສູງດ້ານໜ້າບໍ່ໃຫ້ກາຍ 3 ແມັດ ທຽບໃສ່ລະດັບໜ້າດິນຂອງຕອນດິນ, ສ່ວນທີ່ກໍ່ຕັນບໍ່ໃຫ້ສູງເກີນ 80 ຊັງຕີແມັດ;
- ດ້ານທີ່ຕິດກັບເສັ້ນທາງສາທາລະນະໃຫ້ສາມາດສ່ອງຊອດ ແລະ ແນມເຫັນດ້ານໃນຢ່າງສະດວກ;
- ຮົ້ວດ້ານຂ້າງ ແລະ ດ້ານຫຼັງສາມາດກໍ່ຕັນ ແລະ ສູງບໍ່ເກີນ 2 ແມັດ;
- ໃນພາກປະຕິບັດຕົວຈິງອາຄານ ຫຼື ສະຖານທີ່ໃດຄວນມີຮົ້ວ ຫຼື ບໍ່ມີຮົ້ວ ຫຼື ກໍາແພງນັ້ນຈະໄດ້ແນະນໍາລະອຽດຕື່ມ.

11. ສະຖານທີ່ຈອດຍານພາຫະນະ

ສະຖານທີ່ຈອດຍານພາຫະນະຕ້ອງຢູ່ນອກຂອບເຂດຂອງທາງ ແລະ ຜູ້ກໍ່ສ້າງໄດ້ຮັບສິດນໍາໃຊ້ ຊຶ່ງຢ່າງໜ້ອຍຕ້ອງມີຈໍານວນບ່ອນຈອດລົດດັ່ງຕໍ່ໄປນີ້:

1) ອາຄານທີ່ຢູ່ອາໄສແບບລວມໝູ່ ບ່ອນຈອດ 1 ບ່ອນຕໍ່ 2 ຄອບຄົວ;
2) ໂຮງແຮມ 1 ບ່ອນຈອດຕໍ່ 3 ຫ້ອງພັກ;

3) ໂຮງຮຽນ, ຫ້ອງການ, ທະນາຄານ ບ່ອນຈອດລົດ 1 ບ່ອນຕໍ່ 20 ມ² ຂອງພື້ນທີ່ນຳໃຊ້;
4) ຮ້ານອາຫານ, ຮ້ານບັນເທີງ ບ່ອນຈອດ 1 ບ່ອນຕໍ່ 4 ມ² ຂອງພື້ນທີ່ນຳໃຊ້;
5) ຕະຫຼາດ, ຮ້ານຄ້າ ບ່ອນຈອດ 1 ບ່ອນຕໍ່ 10 ມ² ຂອງພື້ນທີ່ນຳໃຊ້.

ມາດຕາ 12 ເຂດຂະຫຍາຍຂອງຕົວເມືອງ (UD)

ເຂດຂະຫຍາຍຂອງຕົວເມືອງ ກວມເອົາ 5 ບ້ານ ປະກອບມີ:

1. ບ້ານ ໄຊອຸດົມ;
2. ບ້ານ ໄຊຍະມຸງຄຸນ;
3. ບ້ານ ອຸດົມມີໄຊ;
4. ບ້ານ ຈັນທະລັງສີ;
5. ບ້ານ ວິງພັນສີ.

1. ລັກສະນະຂອງເຂດ

- ເປັນເຂດຮອງຮັບສຳລັບການຂະຫຍາຍຕົວ ຂອງຕົວເມືອງໃນອານາຄົດ ຊຶ່ງສາມາດນຳໃຊ້ທີ່ດິນເພື່ອການຢູ່ອາໄສ, ການຄ້າ ແລະ ການບໍລິການປະປົນກັນ;
- ເຂດທີ່ຍັງບໍ່ທັນມີການປຸກສ້າງສາມາດປຸກສ້າງໄດ້, ອະນຸຍາດໃຫ້ສ້າງກິດຈະການບໍລິການ ແລະ ທີ່ພັກອາໄສແບບສ່ວນຕົວ;
- ອະນຸຍາດໃຫ້ເຮັດກິດຈະການການຄ້າ ແລະ ການບໍລິການ.
- **ຈຸດພິເສດຂອງເຂດ**

ບັນດາກິດລະບຽບຂອງເຂດນີ້ ຈະຕ້ອງຊ່ວຍໃຫ້ປົກປັກຮັກສາປະເພດທີ່ພັກອາໄສ ແລະ ກິດຈະການຕ່າງໆ ເຊິ່ງແມ່ນແບບແຜນການດຳລົງຊີວິດແບບພື້ນເມືອງ ເຂດດັ່ງກ່າວນີ້ ອາດຈະສ້າງໃຫ້ມີ ຄວາມໜາແໜ້ນຕ່ຳ ແລະ ສາມາດເພີ່ມຄວາມໜາແໜ້ນຂຶ້ນໄດ້. ເປັນເຂດຮອງຮັບສຳລັບການ ຂະຫຍາຍຕົວຂອງຕົວເມືອງໃນອານາຄົດ ເຊິ່ງສາມາດນຳໃຊ້ທີ່ດິນເພື່ອການຢູ່ອາໄສ, ການຄ້າ ແລະ ການບໍລິການ.

2. ຕົ້ນຕໍໃນການອະນຸຍາດທີ່ດິນເພື່ອ

- ອາຄານທີ່ພັກອາໄສ;
- ອາຄານກິດຈະການຮັບໃຊ້ຄຸ້ມບ້ານດັ່ງກ່າວເຊັ່ນ : ຕະຫຼາດ, ຮ້ານຄ້າຍ່ອຍ, ຮ້ານກິນດື່ມນ້ອຍ, ຮ້ານຫັດຖະກຳ, ບໍລິການສ້ອມແປງທີ່ບໍ່ລົບກວນ ແລະ ບໍ່ມີມົນລະພິດຕໍ່ຊຸມຊົນ ແລະ ສິ່ງແວດລ້ອມ;
- ອາຄານສະຖານທີ່ສຳລັບສາດສະໜາ, ວັດທະນະທຳ-ສັງຄົມ, ການສຶກສາ, ສາທາລະນະສຸກ, ການກິລາ ແລະ ພັກຜ່ອນ.

3. ກໍລະນີພິເສດສາມາດອານຸຍາດນຳໃຊ້ທີ່ດິນເພື່ອ

- ອາຄານສະຖານທີ່ ເພື່ອການປົກຄອງ ແລະ ລັດຖະການ;
- ຄັງສິນຄ້າ ຫຼື ສາງທຸກປະເພດ;
- ໂຮງແຮມ;
- ປ້ຳນ້ຳມັນ;
- ໂຮງງານທຸກປະເພດ;
- ສວນພືດຜັກ;
- ຖ້າຫາກວ່າການຂະຫຍາຍຂອງຕົວເມືອງ ຫາກຕິດພັນກັບການຂະຫຍາຍເນື້ອທີ່ດິນຂອງພາກສ່ວນທີ່ກ່ຽວຂ້ອງທີ່ຈະພັດທະນາ ໃນແຕ່ລະໄລຍະ ຕ້ອງປະສານຫາພາກສ່ວນກ່ຽວຂ້ອງເພື່ອຄົ້ນຄວ້າ ແລະ ພິຈາລະນາ.

4. ທາງເຂົ້າອອກ ແລະ ເສັ້ນທາງ

- ຕອນດິນປຸກສ້າງໄດ້ຈະຕ້ອງຕິດຈອດໂດຍກົງກັບເສັ້ນທາງສາທາລະນະ;
- ກໍລະນີເປັນຕອນດິນທີ່ບໍ່ຕິດຈອດໂດຍກົງກັບເສັ້ນທາງສາທາລະນະ ຕ້ອງໃຫ້ມີທາງຮ່ອມ ເພື່ອເຊື່ອມຕໍ່ຕອນດິນທີ່ບໍ່ຕິດຈອດກັບເສັ້ນທາງສາທາລະນະ;

- ທາງຮ່ອມຄອນມີຂອບເຂດຂອງທາງຢ່າງໜ້ອຍສຸດ 4 ແມັດ, ກໍລະນີເປັນທາງຮ່ອມສຸດຊ່ອງຈະຕ້ອງມີຄວາມຍາວບໍ່ເກີນ 50 ແມັດ, ຖ້າຫາກຍາວກ່ວາ 50 ແມັດ ຕ້ອງມີຂອບເຂດຂອງທາງຢ່າງໜ້ອຍສຸດ 6 ແມັດ ພ້ອມທັງມີບ່ອນຕ່າວຄືນ ຂອງຍານພາຫະນະອີກດ້ວຍ ໂດຍສອດຄ່ອງກັບມາດຕາ 49 ຂອງກົດໝາຍວ່າດ້ວຍກຳມະສິດ.

5. ຕາໜ່າງໂຄງລ່າງເຕັກນິກ

- ຕອນດິນປຸກສ້າງໄດ້ ຕ້ອງສາມາດເຊື່ອມຕໍ່ເຂົ້າໂດຍກົງກັບລະບົບຕາໜ່າງໂຄງລ່າງເຕັກນິກຂອງຕົວເມືອງ (ໂທລະຄົມ, ໄຟຟ້າ, ນ້ຳປະປາ ແລະ ລະບົບລະບາຍນ້ຳ);
- ກໍລະນີການເຊື່ອມຕໍ່ໃສ່ຕາໜ່າງເຕັກນິກດັ່ງກ່າວທີ່ຈະຜ່ານຕອນດິນຂອງກຳມະສິດອື່ນຈະເປັນທາງໃຕ້ດິນ, ໜ້າດິນ ຫຼື ທາງອາກາດກໍ່ຕ້ອງໄດ້ຮັບການເຫັນດີ ຈາກເຈົ້າຂອງກຳມະສິດນັ້ນເປັນລາຍລັກອັກສອນເສຍກ່ອນ ແລະ ໃຫ້ສອດຄ່ອງກັບມາດຕາ 49 ແລະ 50 ຂອງກົດໝາຍວ່າດ້ວຍກຳມະສິດ.

6. ຮູບຮ່າງລັກສະນະ ແລະ ຂະໜາດຂອງຕອນດິນ

ຕອນດິນທີ່ສາມາດປຸກສ້າງໄດ້ຈະຕ້ອງມີຄວາມກ້ວາງຢ່າງໜ້ອຍ 4 ແມັດ ແລະ ມີເນື້ອທີ່ຕອນດິນຢ່າງໜ້ອຍ 150 $ม^2$.

7. ການຕັ້ງອາຄານທຽບໃສ່ຖະໜົນຢູ່ໃນເຂດການຈັດສັນລະອຽດ

- ການຕັ້ງອາຄານຕ້ອງຕັ້ງຕາມເສັ້ນແຖວທີ່ກຳນົດໄວ້;
- ໃນກໍລະນີບໍ່ທັນໄດ້ກຳນົດເສັ້ນແຖວການປຸກສ້າງໄວ້ໃຫ້ຕັ້ງອາຄານໄວ້ຢູ່ຂອບເຂດຂອງທາງ ຊຶ່ງຢ່າງໜ້ອຍໄລຍະຫ່າງຫາຂອບທາງແຕ່ລະປະເພດມີດັ່ງນີ້:

1) ທາງສາຍເອກຫ່າງຈາກຂອບທາງ	ໄລຍະ 6 ແມັດ;
2) ທາງສາຍຫຼັກຫ່າງຈາກຂອບທາງ	ໄລຍະ 5 ແມັດ;
3) ທາງສາຍເຊື່ອມຫ່າງຈາກຂອບທາງ	ໄລຍະ 4 ແມັດ;
4) ທາງສາຍແຈກ (ທາງພາຍໃນບ້ານ)ຫ່າງຈາກຂອບທາງ	ໄລຍະ 3 ແມັດ;
5) ທາງຮ່ອມ (ທາງທີ່ບໍ່ໄດ້ກຳນົດໃນແຜນຜັງ)ຫ່າງຈາກຂອບທາງ	ໄລຍະ 2 ແມັດ.

- ໃນກໍລະນີ ການປຸກສ້າງຫາກນອນໃນເຂດສະຫງວນທາງຫຼວງ ແມ່ນໃຫ້ປະຕິບັດຕາມກົດໝາຍທາງຫຼວງ.
- ບໍລິເວນມຸມຖະໜົນຂອງຈຸດທາງຄົບ, ທາງແຍກ, ອາຄານ ຫຼື ສິ່ງກໍ່ສ້າງ ຕ້ອງຕັ້ງຢູ່ນອກບໍລິເວນເຂດແນມເຫັນຂອງທາງ, ບໍລິເວັນແນມເຫັນດັ່ງກ່າວຕ້ອງປາດໃຫ້ມີມຸມ 135 ອົງສາ ໂດຍໃຫ້ເສັ້ນປາດ ດັ່ງກ່າວໃຫ້ມີຄວາມຍາວຢ່າງໜ້ອຍ 4 ແມັດ ຫຼື ເຮັດໃຫ້ມີມຸມດຽວກັນກັບມຸມໂຄ້ງຂອງຖະໜົນ.

8. ການຕັ້ງອາຄານທຽບໃສ່ເຂດແດນຕອນດິນ

- ອາຄານທີ່ກໍ່ສ້າງຕ້ອງມີຄວາມສູງ ບໍ່ກາຍ 50 ແມັດ ແລະ ມີໄລຍະຫ່າງອາຄານ ຫາ ເຂດແດນຕອນດິນ ໃນແຕ່ລະດ້ານຂອງຕອນດິນຢ່າງໜ້ອຍຕ້ອງເທົ່າກັບ 1/2 ຂອງຄວາມສູງຂອງອາຄານ, ແຕ່ບໍ່ໃຫ້ຫຼຸດ 2 ແມັດ, ກໍລະນີອາຄານກໍ່ສ້າງທີ່ຕັ້ງຕິດໂດຍກົງກັບທາງສາທາລະນະ ໄລຍະຫ່າງດ້ານໜ້າໃຫ້ປະຕິບັດ ຕາມຂໍ້ 7;
- ສາມາດປຸກສ້າງອາຄານໃໝ່ຕິດແປະກັບອາຄານຂ້າງຄຽງທີ່ມີຢູ່ແລ້ວໄດ້, ຖ້າຫາກວ່າດ້ານຂ້າງຂອງອາຄານນັ້ນບໍ່ມີປ່ອງຢ້ຽມ ຫຼື ປ່ອງລະບາຍອາກາດ ແລະ ເມື່ອປຸກສ້າງຕິດກັບຜູ້ຢູ່ຂ້າງຄຽງແລ້ວມີລວງ ຍາວຮ່ວມກັນທັງໝົດບໍ່ໃຫ້ກາຍ 50 ແມັດ.

9. ການຕັ້ງອາຄານຫຼາຍຫຼັງໃນຕອນດິນດຽວກັນ

ອາຄານທີ່ຢູ່ໃນຕອນດິນດຽວກັນ ຈະຕ້ອງຫ່າງກັນຢ່າງໜ້ອຍ ເທົ່າກັບຄວາມສູງຂອງອາຄານທີ່ ສູງກ່ວາ ແຕ່ບໍ່ໃຫ້ຫຼຸດ 4 ແມັດ;

10. ແຈດລ້ອມອ້ອມຂ້າງທີ່ມີຢູ່ຮ້ອ ຫຼື ກ່ຳແພງ

- ລວງສູງດ້ານໜ້າບໍ່ໃຫ້ກາຍ 3 ແມັດ ທຽບໃສ່ລະດັບໜ້າດິນຂອງຕອນດິນ, ສ່ວນທີ່ກໍ່ຕັນບໍ່ໃຫ້ສູງເກີນ 80 ຊັງຕີແມັດ;
- ດ້ານທີ່ຕິດກັບເສັ້ນທາງສາທາລະນະໃຫ້ສາມາດສ່ອງຊອດ ແລະ ແນມເຫັນດ້ານໃນຢ່າງສະດວກ;

- ຮົ້ວດ້ານຂ້າງ ແລະ ດ້ານຫຼັງສາມາດກໍ່ຕັນ ແລະ ສູງບໍ່ເກີນ 2 ແມັດ;
- ໃນພາກປະຕິບັດຕົວຈິງ ອາຄານ ຫຼື ສະຖານທີ່ໃດຄວນມີຮົ້ວ, ບໍ່ມີຮົ້ວ ແລະ ກຳແພງນັ້ນ ຈະໄດ້ແນະນຳ ລະອຽດຕື່ມ.

11. ສະຖານທີ່ຈອດຍານພາຫະນະ

ສະຖານທີ່ຈອດຍານພາຫະນະຕ້ອງຢູ່ນອກຂອບເຂດຂອງທາງ ແລະ ຜູ້ກໍ່ສ້າງໄດ້ຮັບສິດນຳໃຊ້ ຊຶ່ງຢ່າງ ໜ້ອຍຕ້ອງມີຈຳນວນບ່ອນຈອດລົດດັ່ງຕໍ່ໄປນີ້:

1) ອາຄານທີ່ຢູ່ອາໄສແບບລວມໝູ່ ບ່ອນຈອດ 1 ບ່ອນຕໍ່ 2 ຄອບຄົວ;

2) ໂຮງແຮມ 1 ບ່ອນຈອດຕໍ່ 3 ຫ້ອງພັກ;

3) ໂຮງຮຽນ, ຫ້ອງການ, ທະນາຄານ ບ່ອນຈອດລົດ 1 ບ່ອນຕໍ່ 20 $ม^2$ ຂອງພື້ນທີ່ນຳໃຊ້;

4) ຮ້ານອາຫານ, ຮ້ານບັນເທີງ ບ່ອນຈອດ 1 ບ່ອນຕໍ່ 4 $ม^2$ ຂອງພື້ນທີ່ນຳໃຊ້;

5) ຕະຫຼາດ, ຮ້ານຄ້າ ບ່ອນຈອດ 1 ບ່ອນຕໍ່ 10 $ม^2$ ຂອງພື້ນທີ່ນຳໃຊ້.

ມາດຕາ 13 ເຂດສະໜາມບິນ (TA)

ເຂດສະໜາມບິນ ກວມເອົາ 3 ບ້ານ ປະກອບມີ:

1. ບ້ານ ຈະເລີນສຸກ;
2. ບ້ານ ສີບຸນເຮືອງ;
3. ບ້ານ ສະໜາມໄຊ.

- ສຳລັບເຂດສະໜາມບິນນີ້ ແມ່ນກຳນົດໃນລະບຽບການ ການບິນສະເພາະຂອງກົມການບິນພົນລະເຮືອນ.

ມາດຕາ 14 ເຂດອຸດສະຫະກຳ (I)

ເຂດອຸດສະຫະກຳ ກວມເອົາ 2 ບ້ານ ປະກອບມີ:

1. ບ້ານ ໄຊຍະມຸງຄຸນ;
2. ບ້ານ ໄຊອຸດົມ.

- ສຳລັບເຂດເສດຖະກິດພິເສດນີ້ແມ່ນໃຫ້ອີງໃສ່ລະບຽບສະເພາະຂອງເຂດດັ່ງກ່າວ.

ມາດຕາ 15 ເຂດກະສິກຳ (NA)

ເຂດກະສິກຳ ກວມເອົາ 11 ບ້ານ ປະກອບມີ:

1. ບ້ານ ໄຊອຸດົມ;
2. ບ້ານ ວິງພັນສີ;
3. ບ້ານ ອຸດົມມີໄຊ;
4. ບ້ານ ຈັນທະລັງສີ;
5. ບ້ານ ຈອມເພັດ;
6. ບ້ານ ໄຊສົມບຸນ;
7. ບ້ານ ມະນີວົງໄຊ;
8. ບ້ານ ໄຊຍະເພັດ;
9. ບ້ານ ຈະເລີນສຸກ;
10. ບ້ານ ສີບຸນເຮືອງ;
11. ບ້ານ ສະໜາມໄຊ.

1. ລັກສະນະຂອງເຂດ

- ເປັນເຂດນຳໃຊ້ທີ່ດິນ ເພື່ອການກະສິກຳປຸກຝັງ-ລ້ຽງສັດ ແລະ ການປະມົງ ເປັນຕົ້ນຕໍ;

- ເປັນເຂດທີ່ມີການຜະລິດກະສິກຳ: ເປັນເຂດທີ່ສະຫງວນໄວ້ ເພື່ອຈຸດປະສົງຜະລິດກະສິກຳ ເຮັດນາ ເປັນສ່ວນໃຫຍ່, ບາງພື້ນທີ່ກະສິກຳເປັນສວນ;
- ເປັນພື້ນທີ່ທີ່ງນາທີ່ຕິດພັນກັບເຂດການປຸກສ້າງ. ທີ່ງນາດັ່ງກ່າວນີ້ຫ້າມການປຸກສ້າງທຸກກິດຈະການທີ່ ຮັບໃຊ້ ສາທາລະນະ ຫຼື ທີ່ພັກອາໄສທົ່ວໄປ.

2. ກໍລະນີທີ່ເຂດສາມາດອານຸຍາດທີ່ດິນເພື່ອ

- ອາຄານສະຖານທີ່ສຳລັບສາດສະໜາ, ວັດທະນະທຳສັງຄົມ, ການກິລາ ແລະ ພັກຜ່ອນ;
- ອາຄານທີ່ມີການພົວພັນກັບການຜະລິດທາງດ້ານການກະສິກຳປຸກຝັງ-ລ້ຽງສັດ ແລະ ການປະມົງ ໂດຍກົງ.

ມາດຕາ 16 ເຂດປ່າໄມ້ ແລະ ທຳມະຊາດ (NE)

ເຂດປ່າໄມ້ ແລະ ທຳມະຊາດ ກວມເອົາ 4 ບ້ານ ປະກອບມີ:

1. ບ້ານ ໄຊອຸດົມ;
2. ບ້ານ ໄຊຍະມຸງຄຸນ;
3. ບ້ານ ອຸດົມມີໄຊ;
4. ບ້ານ ຈອມເພັດ.

1. ລັກສະນະຂອງເຂດ

- ເປັນເຂດນຳໃຊ້ທີ່ດິນເພື່ອການອະນຸລັກ ແລະ ປົກປັກຮັກສາປ່າໄມ້, ແຫຼ່ງນ້ຳທຳມະຊາດ ແລະ ສະພາບແວດລ້ອມທຳມະຊາດ;
- ເປັນເຂດພື້ນທີ່ທຳມະຊາດປ່າໄມ້ ອ້ອມແອ້ມຕົວເມືອງ, ມີລັກສະນະກົມກືນກັບທຳມະຊາດ ລວມທັງການຮັກສາປ່າໄມ້ ແລະ ຟື້ນຟູທີ່ດິນປ່າໄມ້ໃນເຂດດັ່ງກ່າວ.

ໝວດທີ 3
ເອກະສານ ແລະ ການນຳໃຊ້ເອກະສານແຜນຜັງ

ມາດຕາ 17 ເອກະສານແຜນຜັງ

ເອກະສານກ່ຽວກັບແຜນຜັງປະກອບມີ:

1. ບົດລາຍງານສະບັບສົມບຸນ;
2. ບັນດາແຜນຜັງສະພາບປະຈຸບັນ ແລະ ອອກແບບແຜນຜັງເມືອງໃໝ່;
3. ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງແຜນຜັງເມືອງ ອຸທຸມພອນ;
4. ກົດລະບຽບວ່າດ້ວຍການນຳໃຊ້ທີ່ດິນຜັງຕົວເມືອງ;
5. ການກຳນົດໂຄງການບູລິມະສິດ.

ມາດຕາ 18 ການນຳໃຊ້ທີ່ດິນຜັງເມືອງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຈຸດປະສົງນຳໃຊ້ປະໂຫຍດທີ່ດິນ ຕ້ອງປະຕິບັດດັ່ງນີ້:

1. ສະເໜີຕໍ່ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ອຸທຸມພອນ;
2. ມີແຜນຜັງສະຖາປັດຕະຍະກຳ ຫຼື ແຜນຜັງອັນຈຳເປັນອື່ນໆ ທີ່ສອດຄ່ອງກັບແຜນແມ່ບົດຄຸ້ມຄອງ, ພັດທະນາ ແລະ ປົກປັກຮັກສາເຂດຕົວເມືອງ;

ນອກຈາກນີ້ ກົດລະບຽບ ວ່າດ້ວຍການນຳໃຊ້ທີ່ດິນຜັງເມືອງ ເປັນຄູ່ມືໃນການຄຸ້ມຄອງຕົວເມືອງ ທັງເປັນຄູ່ມື ສຳລັບການຂໍອະນຸຍາດປຸກສ້າງ.

ມາດຕາ 19 ແຜນຜັງຕົວເມືອງອຸທຸມພອນ

ແຜນຜັງຕົວເມືອງ ແມ່ນແຜນຜັງກຳນົດພື້ນທີ່ທີ່ຈະສ້າງ ພັດທະນາ ແລະ ຂະຫຍາຍຕົວເມືອງ ຕາມການວາງແຜນ ໂດຍມີການຈັດສັນລະບົບໂຄງລ່າງພື້ນຖານດ້ານເຕັກນິກ ແລະ ສັງຄົມ, ເຂດທີ່ຢູ່ອາໄສ, ເຂດສຳນັກງານອົງການ, ເຂດກະສິກຳ, ເຂດອຸດສາຫະກຳ, ເຂດການຄ້າ ແລະ ການບໍລິການ, ເຂດວັດທະນະທຳ, ເຂດກິລາ, ສວນສາທາລະນະ, ເຂດຂຽວ, ເຂດຫວງຫ້າມ ແລະ ເຂດອື່ນຢ່າງມີປະສິດທິຜົນ. ສຳລັບແຜນຜັງຕົວເມືອງອຸທຸມພອນ ຈະປະກອບມີຕ້ຳລາຍລະອຽດລຸ່ມນີ້:

1. ແຜນຜັງສະພາບປະຈຸບັນທີ່ຕັ້ງໂຄງການ;
2. ແຜນຜັງຕາໜ່າງປະຈຸບັນ;
3. ແຜນຜັງຕາໜ່າງເສັ້ນທາງ;
4. ແຜນຜັງທີ່ດິນ;
5. ແຜນຜັງຂອບເຂດບ້ານ ແລະ ຄວາມໜາແໜ້ນປະຊາກອນ;
6. ແຜນທີ່ຕັ້ງກິດຈະການຕ່າງໆໃນປະຈຸບັນ;
7. ແຜນຜັງທາງເລືອກການພັດທະນາ;
8. ແຜນຜັງຕາໜ່າງຖະໜົນໃໝ່;
9. ແຜນຜັງທີ່ດິນໃໝ່;
10. ແຜນຜັງການລະບາຍນ້ຳ;
11. ແຜນຜັງກຳຈັດຂີ້ເຫຍື້ອ;
12. ແຜນຜັງໂຄງການຫຼັກ;
13. ແຜນຜັງຕົວຢ່າງການຈັດສັນລະອຽດ.

ມາດຕາ 20 ການນຳໃຊ້ທີ່ດິນໃນແຜນຜັງ

ໃນກໍລະນີບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕ້ອງການຮັບຮູ້ກ່ຽວກັບຄວາມອາດສາມາດໃນການປຸກສ້າງຂອງຕອນດິນໃດໜຶ່ງ ພາຍໃນຕົວເມືອງ ອຸທຸມພອນ, ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ ພ້ອມດ້ວຍປະສານພາກສ່ວນກ່ຽວຂ້ອງ ທີ່ຮັບຜິດຊອບໃຫ້ຄຳປຶກສາ ກ່ຽວກັບກົດລະບຽບ ການນຳໃຊ້ທີ່ດິນຜັງເມືອງຕ້ອງປະຕິບັດ ດັ່ງນີ້:

1. ສຶກສາເບິ່ງຕອນດິນດັ່ງກ່າວຕັ້ງຢູ່ໄດ້ເຂດໃດ ຕາມແຜນຜັງແບ່ງເຂດການນຳໃຊ້ທີ່ດິນ;
2. ນຳໃຊ້ບັນດາຂໍ້ກຳນົດສະເພາະຂອງເຂດຕອນດິນນັ້ນຕັ້ງຢູ່ໃນເຂດດັ່ງກ່າວ.

- ຖ້າດິນຕອນນັ້ນຫາກຢູ່ໃນເຂດສະຫງວນ ຕ້ອງນຳໃຊ້ບັນດາຂໍ້ກຳນົດສະເພາະຂອງເຂດທີ່ດິນຕອນດັ່ງກ່າວຕັ້ງຢູ່;
- ຖ້າຕ້ອງການຂໍອະນຸຍາດປຸກສ້າງ, ທຸບມ້າງ, ຕໍ່ເຕີມ, ສ້ອມແປງອາຄານ ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ ທີ່ຮັບຜິດຊອບ ຕ້ອງປະຕິບັດຕາມຂັ້ນຕອນທີ່ໄດ້ລະບຸໄວ້ ໃນເອກະສານກ່ຽວຂ້ອງທີ່ໄດ້ລະບຸໄວ້.

ໝວດທີ 4
ອົງການຄຸ້ມຄອງແຜນຜັງ

ມາດຕາ 21 ອົງການຄຸ້ມຄອງ

ອົງການຄຸ້ມຄອງແຜນຜັງຕົວເມືອງ ອຸທຸມພອນ ແມ່ນອົງການປົກຄອງແຂວງ ເປັນຜູ້ຄຸ້ມຄອງຢ່າງລວມສຸນໃນຂອບເຂດທົ່ວແຂວງ ໂດຍມອບໃຫ້ຂະແໜງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄຸ້ມຄອງໂດຍກົງ ແລະ ເປັນໃຈກາງໃນການປະສານສົມທົບໃນຂະແໜງການອື່ນທີ່ກ່ຽວຂ້ອງ ຊຶ່ງປະກອບດ້ວຍ:

1. ຂັ້ນແຂວງແມ່ນ: ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ;
2. ຂັ້ນເມືອງແມ່ນ: ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ;
3. ຂັ້ນຕາແສງແມ່ນ: ອົງການປົກຄອງຕາແສງ.

ມາດຕາ 22 ສິດ ແລະ ໜ້າທີ່ຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ

ໃນການຄຸ້ມຄອງການຜັງເມືອງ ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ມີສິດ ແລະ ໜ້າທີ່ຕາມຄວາມຮັບຜິດຊອບຂອງຕົນດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ແຜນພັດທະນາ ກ່ຽວກັບການຜັງເມືອງ, ກົດໝາຍ ແລະ ລະບຽບການ;
2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ແຜນພັດທະນາຕົວເມືອງ, ກົດໝາຍ ແລະ ລະບຽບການ;
3. ຄົ້ນຄວ້າສ້າງແຜນຜັງລວມ ແລະ ແຜນຜັງລວມ;
4. ຊີ້ນຳ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດແຜນຜັງຕົວເມືອງ;
5. ພິຈາລະນາກ່ຽວກັບການປຸກສ້າງ ທີ່ມີຜົນກະທົບຕໍ່ແຜນຜັງຕົວເມືອງ ເຊັ່ນ: ການກໍ່ສ້າງຢູ່ໃນເຂດທີ່ມີຄວາມສ່ຽງຈາກໄພພິບັດທຳມະຊາດ, ເຂດແຄມນ້ຳ, ເຂດສະໜາມບິນ, ເຂດກະສິກຳ ແລະ ອື່ນໆ;
6. ອອກໃບອະນຸຍາດປຸກສ້າງ, ໃບຢັ້ງຢືນຄວາມຖືກຕ້ອງສິ່ງປຸກສ້າງຕາມການແບ່ງຂັ້ນຄຸ້ມຄອງ ພ້ອມທັງຕິດຕາມການນຳໃຊ້ສິ່ງປຸກສ້າງ ດັ່ງກ່າວໃຫ້ຖືກຕ້ອງຕາມລະບຽບຜັງເມືອງ.
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບຜັງເມືອງ.

ມາດຕາ 23 ສິດ ແລະ ໜ້າທີ່ຂອງຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ

ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ ອຸທຸມພອນ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ແຜນພັດທະນາຕົວເມືອງ, ກົດໝາຍ ແລະ ລະບຽບການ;
2. ຮັບຜິດຊອບແຜນຜັງຕົວເມືອງ ຕາມການມອບໝາຍຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ;
3. ກວດກາການຈັດຕັ້ງປະຕິບັດແຜນຜັງຕົວເມືອງອຸທຸມພອນ;
4. ອອກໃບອະນຸຍາດປຸກສ້າງ ແລະ ໃບຢັ້ງຢືນຄວາມຖືກຕ້ອງສິ່ງປຸກສ້າງຕາມການແບ່ງຂັ້ນຄຸ້ມຄອງພ້ອມທັງຕິດຕາມການນຳໃຊ້ສິ່ງປຸກສ້າງ ດັ່ງກ່າວໃຫ້ຖືກຕ້ອງຕາມລະບຽບຜັງເມືອງ;
5. ຄຸ້ມຄອງຜັງເມືອງ ແລະ ເຂດຫວງຫ້າມທີ່ກຳນົດໄວ້ຢູ່ໃນພື້ນທີ່ການອາໆແຜນຕົວເມືອງ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບຜັງເມືອງ.

ມາດຕາ 24 ສິດ ແລະ ໜ້າທີ່ຂອງອົງການປົກຄອງຕາແສງ

ອົງການປົກຄອງຕາແສງມີສິດ ແລະ ໜ້າທີ່ດັ່ງນີ້:

1. ເຜີຍແຜ່, ນຳພາການຈັດຕັ້ງປະຕິບັດລະບຽບ, ຄຳແນະນຳກ່ຽວກັບລະບຽບແຜນຜັງເມືອງຕົວເມືອງອຸທຸມພອນ;
2. ປຸກລະດົມທຸກພາກສ່ວນປະກອບສ່ວນເຂົ້າໃນການຄຸ້ມຄອງລະບຽບແຜນຜັງຕົວເມືອງອຸທຸມພອນ;
3. ອອກໃບອະນຸຍາດປຸກສ້າງ, ໃບຢັ້ງຢືນຄວາມຖືກຕ້ອງສິ່ງປຸກສ້າງ ຕາມການແບ່ງຂັ້ນຄຸ້ມຄອງພ້ອມທັງຕິດຕາມການນຳໃຊ້ສິ່ງປຸກສ້າງດັ່ງກ່າວໃຫ້ຖືກຕ້ອງຕາມລະບຽບຜັງເມືອງ;
4. ປະສານສົມທົບກັບພາກສ່ວນທີ່ກ່ຽວໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລະບຽບແຜນຜັງຕົວເມືອງອຸທຸມພອນ.
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ.

ໝວດທີ 5
ຂໍ້ຫ້າມ

ມາດຕາ 25 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງປະຕິບັດ ດັ່ງນີ້:

1. ນຳໃຊ້ທີ່ດິນ ທີ່ຂັດກັບແຜນຜັງຄຸ້ມຄອງຕົວເມືອງອຸທຸມພອນສະບັບນີ້;
2. ຈັດສັນທີ່ດິນ, ການປຸກສ້າງ ໂດຍບໍ່ໄດ້ຮັບອະນຸຍາດ, ການປຸກສ້າງບໍ່ຖືກຕາມແຜນຜັງ ຫຼື ຄຳແນະນຳ, ການດັດແກ້ແຜນຜັງ ໂດຍບໍ່ໄດ້ຮັບການເຫັນດີ ຈາກພາກສ່ວນທີ່ກ່ຽວຂ້ອງ;
3. ຂຸດດິນ, ຖົມດິນ ແລະ ການກໍ່ສ້າງຕ່າງໆ ທີ່ເປັນການບຸກລຸກເຂດຫວງຫ້າມທີ່ກຳນົດໄວ້ຢູ່ໃນແຜນຜັງ;
4. ສຳຫຼວດ-ອອກແບບ ແລະ ກໍ່ສ້າງ ທີ່ບໍ່ຖືກຕ້ອງຕາມແຜນຜັງຕົວເມືອງ, ລະບຽບການນຳໃຊ້ທີ່ດິນ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ;
5. ດັດແປງສະພາບຕົວຈິງຂອງໜ້າດິນ, ສິ່ງປຸກສ້າງ ແລະ ສະພາບແວດລ້ອມທຳມະຊາດທີ່ຢູ່ໃນການຄຸ້ມຄອງ ແລະ ນຳໃຊ້ຂອງດິນ ຊຶ່ງພາໃຫ້ມີການປ່ຽນແປງເຂດນຳໃຊ້ທີ່ດິນຕາມທີ່ໄດ້ກຳນົດໄວ້ໃນແຜນຜັງຕົວເມືອງ;
6. ພຶດຕິກຳອື່ນທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້.

ມາດຕາ 26 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ

ພະນັກງານ-ລັດຖະກອນ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;
2. ເມີນເສີຍ, ປະລະໜ້າທີ່ວຽກງານ ທີ່ການຈັດຕັ້ງມອບໝາຍໃຫ້;
3. ປອມແປງເອກະສານກ່ຽວກັບແຜນຜັງ;
4. ເກັບຄ່າທຳນຽມ, ຄ່າບໍລິການ ບໍ່ຖືກຕ້ອງຕາມລະບຽບການ;
5. ເປີດເຜີຍຄວາມລັບ ແລະ ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

ໝວດທີ 6
ການກວດກາ

ມາດຕາ 27 ອົງການກວດກາ

1. **ອົງການກວດກາພາຍໃນ** ແມ່ນອົງການດຽວກັນກັບອົງການຄຸ້ມຄອງ ທີ່ກຳນົດໄວ້ໃນມາດຕາ 21 ຕາມຂໍ້ຕົກລົງສະບັບນີ້.
2. **ອົງການກວດກາພາຍນອກ** ປະກອບມີ ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ, ອົງການກວດສອບປະຈຳພາກ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ, ສ່ວນພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ ແມ່ນກຳນົດໄວ້ໃນກົດໝາຍ ແລະ ລະບຽບການສະເພາະ.

ມາດຕາ 28 ເນື້ອໃນກວດກາ

ເນື້ອໃນກວດກາແຜນຜັງຕົວເມືອງອຸທຸມພອນ ມີເນື້ອໃນດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການລົງທຶນກ່ຽວກັບແຜນຜັງຕົວເມືອງອຸທຸມພອນ;
2. ປະເພດ, ເນື້ອໃນ, ກຳນົດໝາຍ ແລະ ມາດຕະຖານເຕັກນິກໃນການສຳຫຼວດ-ອອກແບບແຜນຜັງຕົວເມືອງອຸທຸມພອນ;
3. ການປະມູນ, ສັນຍາກ່ຽວກັບການສຳຫຼວດ-ອອກແບບແຜນຜັງຕົວເມືອງອຸທຸມພອນ;

4. ຄວາມຖືກຕ້ອງຂອງການນຳໃຊ້ທີ່ດິນ, ເສັ້ນແຖວປຸກສ້າງ, ຮູບຊົງສະຖາປັດຕະຍະກຳໃຫ້ສອດຄ່ອງກັບແຜນຜັງຕົວເມືອງອຸທຸມພອນ;

5. ການພັດທະນາໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມຂອງຂອງຕົວເມືອງອຸທຸມພອນ.

ມາດຕາ 29 ຮູບການກວດກາ

ຮູບການກວດກາແຜນຜັງຕົວເມືອງອຸທຸມພອນ ມີ 3 ຮູບການດັ່ງນີ້:

1. ການກວດກາ ຢ່າງເປັນລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

ໃນການດຳເນີນການກວດກາການຜັງເມືองນັ້ນ ເຈົ້າໜ້າທີ່ຜັງເມືอง ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

ໝວດ 7
ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການລະເມີດ

ມາດຕາ 30 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດຕາມຂໍ້ຕົກລົງແຜນຜັງຕົວເມືองນອຸທຸມພອນ ສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບນະໂຍບາຍອື່ນໆຕາມລະບຽບການ.

ມາດຕາ 31 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມກ່າວເຕືอน, ລົງວິໄນ, ປັບໃໝ ຫຼື ລົງໂທດທາງອາຍາ ຕາມກົດໝາຍ ແລະ ລະບຽບການສະເພາະ.

ໝວດທີ 8
ບົດບັນຍັດສຸດທ້າຍ

ມາດຕາ 32 ການຈັດຕັ້ງປະຕິບັດ

ພະແນກໂຍທາທິການ ແລະ ຂົນສົ่ง ແຂวงสะหวันนะเขด, ຫ້ອงການໂຍທາທິການ ແລະ ຂົນສົ่ง ເມືองอุทุมพอน ແລະ ອົงการปกครองตาแสง ມີໜ້າທີ່ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 33 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ລົງຈົດໝາຍເຫດ ທາງລັດຖະການ 15 ວັນ ເປັນຕົ້ນໄປ.

ເຈົ້າແຂวง

ບຸນໄຈມ ອຸບົນປະເສີດ


2,654 m
1,830 m
3,302 m
2,391 m
1,353 m
2,331 m
4,075 m
5,620 m
UD1
UD2
UC
NA
UB
TA